# ສຽງບໍ່ຄໍາເຊໂປນ

ວາລະສານສໍາລັບພະນັກງານ ແລະ ຜູ້ຮັບເໝົາຂອງບໍ່ຄໍາ-ທອງ ເຊໂປນ

## ໃນສະບັບນີ້

ລຊມລ ສະເຫຼີມສະຫຼອງການຜະລິດຄໍາໄດ້ 2 ໂຕນ

ການນໍາແມ່ຍິງ

ລຊມລ ແລະ ກະຊວງປ້ອງກັນປະເທດ ເຊັນສັນຍາຮ່ວມກັນ 2 ສະບັບ

ສະພາແຫ່ງຊາດ ອະນຸມັດການອວ່າຍແລວນໍ້າ ສໍາລັບໂຄງການຄໍາ ເຊໂປນ

**ມີນາ 2021**




ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万象矿业有限公司
CHIFENG LXML SEPON

# ສາລະບານ


25


23


17


15


22


**3.** ຜົນງານຂອງ ບໍ່ຄຳ-ທອງ ເຊໂປນ

**5.** ລຊມລ ສະເຫຼີມສະຫຼອງການຜະລິດຄຳໄດ້ 2 ໂຕນ

**6.** ລຊມລ ສືບຕໍ່ສະໜັບສະໜູນ 80 ລ້ານກີບ ໃຫ້ແກ່ ສຄອຊ

**7.** ການນຳແມ່ຍິງ

**11.** ການສື່ສານເວລາໃສ່ ຜ້າປິດ ປາກ-ດັງ

**13.** ສຳພາດເຈາະເລິກ ແລະ ສ່ວນຕົວ ກັບ ຄາຣ ເບເກີ້ ດູລີ້

**15.** 5 ນາທີ ກັບ ວິເມພາ ວິໄລພອນ

**17.** ຄົ້ນພົບ ວັດຖຸບູຮານ ອາຍຸເກົ່າແກ່ 6,000 ປີ ໃກ້ບໍ່ຄຳ-ທອງ ເຊໂປນ

**19.** ກອງທຶນພັດທະນາທ້ອງຖິ່ນ ເລັ່ງໃສ່ ປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃຫ້ຍືນຍົງ

**21.** ລຊມລ ແລະ ກະຊວງປ້ອງກັນປະເທດ ເຊັນສັນຍາຮ່ວມກັນ 2 ສະບັບ

**23.** ສະພາແຫ່ງຊາດ ອະນຸມັດການອວ່າຍແລວນ້ຳ ໃຫ້ແກ່ໂຄງການຄຳ ເຊໂປນ

**25.** ແຜນການຄຸ້ມຄອງ ແລະ ຕິດຕາມວຽກງານສາທາລະນະສຸກ ໄດ້ຮັບການອະນຸມັດ

**27.** ພາບຂ່າວ

**28.** ສະຖິຕິ ຂອງບໍ່ຄຳ-ທອງເຊໂປນ

**29.** ສະເຫຼີມສະຫຼອງ 30 ປີ ໃນການປະກອບສ່ວນກັບ ລຊມລ

**30.** ໂຄງການ ເຊໂປນ 2.5




**ຂ່າວດີຂອງພວກເຮົາ**
**ຂ່າວດີ ຂອງທຸກຄົນ**

ວາລະສານສຽງບໍ່ຄຳເຊໂປນ ຍິນດີຮັບເອົາ ແລະ ພິມເຜີຍແຜ່ ຂ່າວສານ ແລະຮູບພາບຂອງທ່ານ. ນອກຈາກນີ້ ພວກເຮົາ ຂໍຮຽນເຊີນທ່ານຈົ່ງສົ່ງຂໍ້ມູນກ່ຽວກັບງານ, ກິດຈະກຳ ຫຼື ວັນສຳຄັນ ຂອງພະແນກທ່ານ ທີ່ ທ່ານຄິດວ່າ ຈະເປັນຂໍ້ມູນດີໆສຳລັບຜູ້ອ່ານ ຂອງພວກເຮົາ ເປັນຕົ້ນແມ່ນ ງານທີ່ທ່ານເປັນ ຜູ້ຈັດ ຫຼື ຈະເຂົ້າຮ່ວມ.



ດີຖີ!

ວັນທີ 8 ເດືອນ ຕັ້ງ
ເປີດສັງກາດໃໝ່ໃຫ້
ຍິງ-ຊາຍ ໄດ້
ປະກອບສ່ວນ ຊ່ວຍສ້າງ

ເປັນວັນປະຫວັດສາດ!
ແມ່ຍິງ-ໄດ້ພັດທະນາ!
ມີຄວາມສະເໝີພາບ!
ສັງຄົມກ້າວ-ຮຸ່ງຈະເລີນ!

ສ່ວນວ່າ: ກ້ຳຝ່າຍເບື້ອງ
ການນຳ-ການປົກຄອງ
ໃນເວທີການຄ້າ
ເປັນທີ່ ຍອມຮັບຮູ້

ຂົງເຂດ-ການເມືອງ!
ຝ່າຍຍິງ ກໍ່ທຳໄດ້!
ວິຊາການ ກໍ່ພົ້ນເດັ່ນ!
ກັນແທ້-ທົ່ວໄປ! (ຊອບແລ)!

ດຽວນີ້! ທົ່ວໂລກ-ໄດ້
ໄວຣັດສ໌ ໂຄໂຣນາ
ແມ່ຍິງ ໂຮມແຮງສູ້!
ເພດຍິງ ຍັງຊ່ວຍສ້າງ

ປະສົບເຫດ-ໄພພິບັດ!
ແຜ່ກະຈາຍ-ໄປກວ້າງ!
ຈຳກັດການແຜ່ລະບາດ!
ຜະລິດໄດ້ "ວັກຊິນ" ແທ້ແລ!

ສັງຄົມຍິນດີດ້ວຍ
ຈຶ່ງຂໍຖືໂອກາດນີ້
ໃຫ້ໄດ້ມີຜົນງານລ້ຳ
ມີຄວາມສຸກຍິ່ງລ້ຳ

ຜົນງານ-ມີມາກ!
ສົ່ງພອນໃຫ້ຝ່າຍທ່ານຍິງ!
ໃນການງານ-ທຸກປະເພດ!
ສະເໝີດ້ານ-ດັ່ງຫວັງ (ແມ່ຖ້ອນ)

# ຜົນງານຂອງ ບໍ່ຄຳ-ທອງເຊໂປນ

# ການປະຕິບັດງານ ປີ 2020

ໃນປີ 2020 ລຊມລ ໄດ້ບັນລຸຜົນສຳເລັດສຳຄັນຫຼາຍປະການ. ຜົນຮັບດ້ານການຜະລິດ ແລະ ດ້ານການເງິນທີ່ເຂັ້ມແຂງ ໄດ້ຍົກລະດັບຊື່ສຽງຂອງບໍລິສັດ ຊີເຟີງ ໃນເວທີສາກົນ. ພວກເຮົາທຸກໆຄົນ ເປັນສ່ວນໜຶ່ງທີ່ສຳຄັນ ເຮັດໃຫ້ຜົນຮັບນີ້ ເປັນໄປໄດ້. ຂໍຂອບໃຈທຸກໆຄົນທີ່ອຸທິດເຫື່ອແຮງ ແລະ ຕັ້ງໃຈເຮັດວຽກຢ່າງເຕັມທີ່.

ປີ 2021 ຈະເປັນປີທີ່ທ້າທາຍ. ໂຄງການເຊໂປນຈະເຕີບຕົວຢ່າງຕໍ່ເນື່ອງ. ພວກເຮົາມີແຜນເພີ່ມ ເປົ້າໝາຍການຜະລິດຄຳ ຈາກ 8 ໂຕນ ເປັນ 10 ໂຕນ ໃນປີ 2023. ໂຄງການ ເຊໂປນ 2.5 ແລະ ແຜນງານອື່ນໆ ຈະຂັບເຄື່ອນການເຕີບຕົວຂອງເຊໂປນໃນ ອະນາຄົດ.



**ການຂຸດຄົ້ນບໍ່ແຮ່** - ປະລິມານແຮ່ທັງໝົດທີ່ຂົນສົ່ງລື່ນຄາດໝາຍ 13% ໄດ້ 32 ລ້ານໂຕນ ສົມທຽບໃສ່ຄາດໝາຍ 28,3 ລ້ານໂຕນ. ຜົນງານດ້ານການຊີເຈາະ ແລະ ລະເບີດ ໄດ້ເພີ່ມຂຶ້ນມະຫາສານໃນເດືອນ ທັນວາ ໃນຂະນະທີ່ຄວາມພ້ອມຂອງກົນຈັກ ແລະ ການນຳໃຊ້ລົດແກ່ແຮ່ ໄດ້ມີປະສິດທິຜົນດີຂຶ້ນໃນ ໄຕມາດ 4. ເພື່ອສະໜັບສະໜູນເປົ້າໝາຍການຜະລິດ, ພວກເຮົາຕ້ອງປັບປຸງ ປະສິດທິຜົນຂອງວຽກງານຂຸດຄົ້ນບໍ່ແຮ່.

**ການເງິນ** - ພວກເຮົາບັນລຸກຳໄລສຸດທິ US$47 ລ້ານ ລື່ນຄາດໝາຍທີ່ວາງໄວ້ US$40 ລ້ານ ຫຼື 14,5%. ອັນນີ້ ເປັນອີກໜຶ່ງຜົນສຳເລັດພົ້ນເດັ່ນ ເມື່ອຄຳນຶງເຖິງ ຜົນກະທົບຈາກ ການລະບາດພະຍາດ COVID-19. ໃນປີ 2021, ພວກເຮົາຈະເພີ່ມຜົນການຜະລິດ ເພື່ອເພີ່ມລາຍຮັບ ແລະ ຮັກສາຕົ້ນທຶນການຜະລິດທີ່ US$780/oz/Au.






**ຄວາມປອດໄພ** - ສົມທຽບໃສ່ປີ 2019, ຜົນງານດ້ານຄວາມປອດໄພຂອງພວກເຮົາໄດ້ຖືກຖອຍລົງ ໂດຍອັດຕາ TRIFR ໄດ້ທະວີຄູນຂຶ້ນ ສາມເທົ່າ ຈາກ 0,38 (2019) ເປັນ 1,2 (2020). ອັນນີ້ ຕິດພັນກັບສິ່ງທ້າທາຍໃນການຄຸ້ມຄອງຜູ້ຮັບເໝົາໃນການສ້າງໂຮງງານໃໝ່. ຜົນງານດ້ານຄວາມປອດໄພ ໃນ ໄຕມາດ 4 ຖືວ່າ ດີຢູ່.

ໃນປີ 2021, ພວກເຮົາຕ້ອງຍຶດຖືຫຼັກການ 'ຢຸດ ແລະ ຄິດ' ແລະ 'ເທັກຟາຍ' ເພື່ອ ບັນລຸໃຫ້ໄດ້ເປົ້າໝາຍ ບໍ່ໃຫ້ມີການບາດເຈັບເກີດຂຶ້ນ (ການບາດເຈັບເທົ່າ 0). ໃນປີຜ່ານມາ, ບໍ່ມີເຫດການຮ້າຍແຮງທາງສິ່ງແວດລ້ອມ.



**ເຊໂປນ 2.5** - ເປັນໂຄງການທີ່ແນໃສ່ເພີ່ມກຳລັງການປ້ອນແຮ່ເຂົ້າໂຮງງານຜະລິດ ຈາກ 1.5Mtpa ເປັນ 2.5Mtpa. ພວກເຮົາຈະຕິດຕັ້ງເພີ່ມ ລູກເຫຼັກໂຮງໂມ້, ກຳລັງການສ້າງອົກຊີແຊນ, POX, ລະບົບການຟູລອຍ ແລະ ເພີ່ມຂັ້ນຕອນໃໝ່ ໃນການສະກັດແຮ່ດ້ວຍຄວາມຮ້ອນ ແລະ ສາຍພານ CCD.

**ການຜະລິດ** - ພວກເຮົາບໍ່ສາມາດບັນລຸເປົ້າໝາຍການຜະລິດທອງ ເຊິ່ງຫລຸດຄາດໝາຍໄປ 18% ແຕ່ວ່າສາມາດບັນລຸລື່ນຄາດໝາຍການຜະລິດຄຳ. ໃນປີ 2020 ພວກເຮົາຜະລິດຄຳໄດ້ 2.015,799 ກິໂລກຣາມ.

ໃນປີນີ້ ຜົນການຜະລິດທອງແມ່ນຍັງມີຄວາມສຳຄັນ ຍ້ອນພວກເຮົາຕ້ອງຍາດແຍ່ງໂອກາດໃນເວລາທີ່ລາຄາທອງສູງຂຶ້ນ. ເປົ້າໝາຍການຜະລິດທອງຂອງພວກເຮົາແມ່ນ 6,699 ໂຕນ ແລະ ການຜະລິດຄຳ ແມ່ນ 8 ໂຕນ. ເປົ້າໝາຍນີ້ຮຽກຮ້ອງໃຫ້ພວກເຮົາຕ້ອງມຸ່ງໝັ້ນ, ສຸມໃສ່ ແລະ ເຮັດວຽກເປັນທີມງານ.



**ການສຳຫຼວດ** - ພວກເຮົາຕັ້ງໜ້າດຳເນີນການສຳຫຼວດເພື່ອຍືດອາຍຸການບໍ່ເຊໂປນອອກໄປອີກ.





# ລ້ານຊ້າງ ມິເນີໂຣນສ໌ ລິມິເຕັດ ສະເຫຼີມ ສະຫຼອງ ການຜະລິດຄຳໄດ້ 2 ໂຕນກວ່າ

ຕະຫຼອດ 3 ອາທິດຂອງເດືອນ ມັງກອນ 2021, ລຊມລ ໄດ້ສະຫຼອງເພື່ອຂອບໃຈ ແລະ ຍ້ອງຍໍ ພະນັກງານທຸກຄົນທີ່ຕັ້ງໜ້າເອົາໃຈໃສ່ເຮັດວຽກຢ່າງສຸດໃຈ ແລະ ອຸທິດເຫື່ອແຮງຂອງຕົນເຂົ້າໃນການບັນລຸຄາດໝາຍການຜະລິດຄຳໄດ້ 2 ໂຕນ ໃນປີ 2020.

**ທ່ານ ຄາຣ ເບເກີ້ ດູລີ້, ຮອງຜູ້ຈັດການໃຫຍ່ ຝ່າຍດຳເນີນງານ** ໄດ້ກ່າວວ່າ: "ອັນນີ້ ເປັນຜົນສຳເລັດພົ້ນເດັ່ນ. ພວກເຮົາທຸກຄົນ ຈະສະຫຼອງ ຍຸກໃໝ່ແຫ່ງການຜະລິດຄຳ ໄປພ້ອມໆກັນ."

ພະນັກງານຈາກທຸກໆພຽນວຽກໄດ້ມີໂອກາດສະຫຼອງຮ່ວມພາເຂົ້າສາມາຄີພິເສດ.

ພວກເຮົາຫວັງວ່າທ່ານ ໄດ້ສະຫຼອງຢ່າງມ່ວນຊື່ນ ແລະ ຊົມເຊີຍຕົວເອງ ສຳລັບຜົນສຳເລັດພົ້ນເດັ່ນນີ້!










# ລຊມລ ສືບຕໍ່ ສະໜັບສະໜູນ 80 ລ້ານກີບ ໃຫ້ແກ່ ສຄອຊ

**2 ມັງກອນ 2021 -** ລຊມລ ໄດ້ສະໜັບສະໜູນ 80 ລ້ານກີບ ເຂົ້າໃສ່ ກິດຈະກຳຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (ສຄອຊ). ບໍລິສັດ ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນນາມສະມາຊິກຂອງ ສຄອຊ ເພື່ອສະໜັບສະໜູນ ຂະແໜງການເອກະຊົນ ໃນ ສປປ ລາວ ມາໄດ້ຫຼາຍກວ່າ 8 ປີ.

ລຊມລ ຮັບຮູ້ ວຽກງານອັນສຳຄັນຂອງ ສຄອຊ ໃນການສະໜັບສະໜູນ ທຸລະກິດລາວ ໃຫ້ຜ່ານຜ່າ ວິກິດການ COVID-19 ໃນໂລກ.

**ທ່ານ ຈັນທອນ ເນົາວະລາດ, ຫົວໜ້າສາຍງານພົວພັນກັບລັດຖະບານ** ໄດ້ກ່າວວ່າ: "ການປະກອບສ່ວນຂອງ ລຊມລ ຕໍ່ ຂະແໜງການເອກະຊົນ ສະແດງໃຫ້ເຫັນວ່າ 'ການຂຸດຄົ້ນບໍ່ແຮ່ຢ່າງດີເລີດ ສ້າງຄວາມອຸດົມຮັ່ງມີໃຫ້ແກ່ທຸກຄົນ'. ພວກເຮົາເຮັດວຽກຮ່ວມກັນເພື່ອເປັນແບບຢ່າງທີ່ດີ ແລະ ດຶງດູດນັກລົງທຶນຕ່າງປະເທດ ກໍຄື ບໍລິສັດພາຍໃນ ໃຫ້ສະໜັບສະໜູນ ສຄອຊ, ວິສະຫະກິດຂະໜາດນ້ອຍ-ກາງ ແລະ ຂະແໜງການເອກະຊົນໂດຍລວມ ໃນ ສປປ ລາວ."

ສຄອຊ ຖືກສ້າງຕັ້ງຂຶ້ນໃນປີ 1989 ເປັນອົງການເອກະລາດເພື່ອສັງຄົມ ທີ່ຕາງໜ້າໃຫ້ຫົວໜ່ວຍທຸລະກິດໃນ ສປປ ລາວ. ສຄອຊ ມີສະມາຊິກ ກວ່າ 4.000 ຄົນ ຈາກຫຼາກຫຼາຍພາກສ່ວນເອກະຊົນ, ທຸລະກິດນ້ອຍ-ກາງ ແລະ ອຸດສາຫະກຳ ໃນ ສປປ ລາວ ໂດຍມີເປົ້າໝາຍ 'ເພື່ອຍົກລະດັບຄວາມອາດສາມາດຂອງຫົວໜ່ວຍທຸລະກິດ ເພື່ອການສ້າງສາພັດທະນາປະເທດຊາດ.'






*ທ່ານ ຈັນທອນ ເນົາວະລາດ, ຫົວໜ້າສາຍງານພົວພັນກັບລັດຖະບານ ມອບ ເງິນປະກອບສ່ວນສະມາຊິກ VVIP ໃຫ້ແກ່ ທ່ານ ດາວວອນ ພະຈັນທະວົງ, ຮອງປະທານກິຕິມະສັກ ສຄອຊ.*

# ການນຳ ແມ່ຍິງ: ການບັນລຸຄວາມສະເໝີພາບໃນໄລຍະ COVID-19

ວັນແມ່ຍິງສາກົນປີນີ້, ພວກເຮົາ ສະເຫຼີມສະຫຼອງ ຄວາມພະຍາຍາມ ມະຫາສານຂອງແມ່ຍິງ ແລະ ເດັກຍິງ ໃນການສ້າງອະນາຄົດທີ່ມີ ຄວາມເທົ່າທຽມກວ່າເກົ່າ ແລະ ການຟື້ນຕົວຈາກ ສະພາບການ ລະບາດ COVID-19 ໃຫ້ດີກວ່າເກົ່າ, ພາຍໃຕ້ຄຳຂວັນ "ການນຳ ແມ່ຍິງ: ການບັນລຸຄວາມສະເໝີພາບ ໃນໄລຍະ COVID-19."



ປະເທດທີ່ມີຜົນສຳເລັດໃນການຮັບມືກັບຄື້ນການລະບາດ COVID-19 ແລະ ການບັນເທົາຜົນກະທົບດ້ານເສດຖະກິດ-ສັງຄົມທີ່ຕາມມາ ສ່ວນໃຫຍ່ ແມ່ນປະເທດ ທີ່ນຳພາໂດຍແມ່ຍິງ. ຕົວຢ່າງ, ຜູ້ນຳພາລັດຖະບານ ໃນປະເທດ ແດນມາກ, ເອຕິໂອເປຍ, ຟິນແລນ, ເຢຍລະມັນ, ນິວຊີແລນ ແລະ ໄຊວາເກຍ ນັ້ນເປັນທີ່ຮັບຮູ້ຢ່າງກວ້າງຂວາງ ສຳລັບ ຄວາມວ່ອງໄວ, ການຕັດສິນໃຈສູງ ແລະ ປະສິດທິຜົນ ໃນການຮັບມືກັບ COVID-19 ໃນຂັ້ນປະເທດ.

ແຕ່ວ່າ ມີ 20 ປະເທດເທົ່ານັ້ນ ທີ່ມີ ແມ່ຍິງ ເປັນຜູ້ນຳພາ ລັດ ແລະ ລັດຖະບານ.

ໃນ ສປປ ລາວ ຜູ້ແທນສະພາທີ່ເປັນແມ່ຍິງກວມເອົາ 25%. ຢູ່ ລຊມລ, ພະນັກງານແມ່ຍິງ ກວມເອົາປະມານ 25%.

ນອກຈາກ ອຸປະສັກທາງສັງຄົມ ແລະ ທາງລະບົບຕໍ່ ການມີສ່ວນຮ່ວມ ແລະ ການນຳພາຂອງແມ່ຍິງທີ່ມີຢູ່ແລ້ວ, ອຸປະສັກໃໝ່ໆ ກໍ ປະກົດຂຶ້ນຄຽງຄູ່ກັບການລະບາດພະຍາດ COVID-19. ໃນທົ່ວໂລກ ແມ່ຍິງພົບກັບ ຄວາມຮຸນແຮງໃນຄອບຄົວຫຼາຍຂຶ້ນ, ເຮັດວຽກເຮືອນຫຼາຍຂຶ້ນ ແລະ ບໍ່ມີວຽກເຮັດງານທຳ ແລະ ທຸກຍາກຫຼາຍຂຶ້ນ. ໃນທົ່ວໂລກ, ຈະມີເດັກຍິງສຶກສາຊັ້ນມັດທະຍົມ ອອກຈາກໂຮງຮຽນເພີ່ມຂຶ້ນ 20 ລ້ານຄົນ ຍ້ອນ COVID-19 . 40% ຂອງແມ່ຍິງທີ່ເຮັດວຽກທັງໝົດ – 510 ລ້ານຄົນໃນທົ່ວໂລກ – ແມ່ນເຮັດວຽກໃນຂະແໜງການທີ່ຖືກກະທົບຫຼາຍທີ່ສຸດຈາກ COVID-19.

## ວິກິດການ ມີຜົນກະທົບຕໍ່ແມ່ຍິງ ຫຼາຍກວ່າ, ຍ້ອນ:

- ແມ່ຍິງ ມີທ່າອ່ຽງ ໄດ້ຮັບລາຍໄດ້ ຕໍ່າກວ່າ.
- ແມ່ຍິງ ມີເງິນທ້ອນ ໜ້ອຍກວ່າ.
- ແມ່ຍິງ ສ່ວນໃຫຍ່ ແມ່ນເຮັດວຽກ ຫຼື ຢູ່ໃນ ເສດຖະກິດນອກລະບົບ.
- ແມ່ຍິງ ເຂົ້າເຖິງ ລະບົບການປະກັນສັງຄົມ ໜ້ອຍກວ່າ.
- ແມ່ຍິງ ແບກຫາບ ວຽກເຮືອນ/ວຽກຄອບຄົວ ຫຼາຍກວ່າ. ສະນັ້ນ, ເຂົາເຈົ້າຕ້ອງອອກຈາກ ບ່ອນເຮັດວຽກ.
- ແມ່ຍິງກວມເອົາສ່ວນໃຫຍ່ ຂອງ ຄອບຄົວລ້ຽງດ່ຽວ.

*ແຫຼ່ງຂໍ້ມູນ: UN Women 2020*

## ຄວາມເຫັນຂອງພະນັກງານ ບໍ່ຄຳ-ທອງເຊໂປນ

ກ່ຽວກັບ ການສະຫຼອງ ວັນແມ່ຍິງສາກົນ, ການສົ່ງເສີມ ແມ່ຍິງ ແລະ ເດັກຍິງໃນຍຸກ COVID-19, ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ ຄູ່ຊີວິດ/ລູກສາວ/ເພື່ອນຮ່ວມງານຍິງ ຢູ່ບ່ອນເຮັດວຽກ ຫຼື ໃນສັງຄົມ ໂດຍລວມ?



**ສຸພາພອນ ອຸດົມ**
ນັກເຄມີ, ພະແນກການຜະລິດ

" ຂ້າພະເຈົ້າເຫັນວ່າ ວັນແມ່ຍິງສາກົນ ເປັນວັນໜຶ່ງທີ່ສຳຄັນຂອງແມ່ຍິງທຸກຄົນທີ່ຢາກຈະສະເຫຼີມສະຫຼອງຮ່ວມກັບຄອບຄົວແບບອົບອຸ່ນ ເພື່ອຮັດແໜ້ນສາຍສຳພັນພາຍໃນຄອບຄົວ. ແຕ່ສິ່ງສຳຄັນຕ້ອງຄຳນຶງເຖິງຄວາມປອດໄພຂອງຕົວເອງ, ຄອບຄົວ ແລະ ຄົນອື່ນ ໃນໄລຍະການລະບາດຂອງພະຍາດ ໂຄວິດ-19 ໂດຍປະຕິບັດຕາມຄຳສັ່ງຂອງຂັ້ນເທິງວາງອອກໃນແຕ່ລະໄລຍະຢ່າງເຂັ້ມງວດເປັນຕົ້ນ ການໃສ່ຜ້າອັດດັງເວລາໄປສະຖານທີ່ ທີ່ມີຄົນຫຼາຍ ຫຼື ບ່ອນທີ່ມີຄວາມສ່ຽງ, ລ້າງມືດ້ວຍນ້ຳຢາຂ້າເຊື້ອ, ການຮັກສາໄລຍະຫ່າງ ແລະ ອື່ນໆ.

ນອກຈາກນັ້ນ, ການສະເຫຼີມສະຫຼອງວັນແມ່ຍິງສາກົນ ຄວນຈະມີການເລົ່າຄືນມູນເຊື້ອວັນແມ່ຍິງສາກົນ ແລະ ເຜີຍແຜ່ບາງເນື້ອໃນ ຂອງກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ຄວນຈັດກິດຈະກຳໃດໜຶ່ງ ທີ່ມີລັກສະນະການແຂ່ງຂັນກັນລະຫວ່າງຍິງ-ຊາຍເພື່ອຍົກໃຫ້ເຫັນວ່າ ແມ່ຍິງກໍສາມາດເຮັດໄດ້ຄືກັບຜູ້ຊາຍ.

ສຳລັບການສົ່ງເສີມບົດບາດ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງຢູ່ໃນສະຖານທີ່ເຮັດວຽກ, ຂ້າພະເຈົ້າເຫັນວ່າ ຄວນມີການຍົກສູງແມ່ຍິງໃນການມີຄຳຄິດຄຳເຫັນໃນວຽກງານຕ່າງໆໃຫ້ຫຼາຍຂຶ້ນ ກໍຄື ມີການຝຶກອົບຮົມໃຫ້ພະນັກງານເພດຍິງໃຫ້ຫຼາຍຂຶ້ນກວ່າເກົ່າ ເພື່ອຍົກສູງຄວາມຮູ້ຄວາມສາມາດໃຫ້ແກ່ເຂົາເຈົ້າ. "



**ວິໄລທອງ ສີສົມຫວັງ**
ຫົວໜ້າສາຍງານບໍລິການບໍ່ແຮ່ & ໂຄງການ

" ຂ້າພະເຈົ້າຖືວ່າ ວັນແມ່ຍິງສາກົນ ມີຄວາມຫມາຍຄວາມສຳຄັນຫລາຍ, ມີອັນພົ້ນເດັ່ນໃນອົງກອນ ແລະ ໃນສັງຄົມ. ສະນັ້ນການສະຫຼອງກໍສາມາດສະແດງອອກໄດ້ແບບງ່າຍໆ ໂດຍການໃຫ້ກຽດຕໍ່ເພດຍິງ ແລະ ເຄົາລົບແນວຄິດການກະທຳຂອງເຂົາເຈົ້າ, ບໍ່ວ່າໃນສະຖານທີ່ເຮັດວຽກ, ອົງກອນ ຫຼື ສັງຄົມ.

ໂດຍລວມ, ແມ່ຍິງຄວນໄດ້ ຮັບການສົ່ງເສີມແນວຄິດ ແລະ ເພີ່ມພູນຂີດຄວາມຮູ້ ຄວາມອາດສາມາດ ຂອງເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າບັນລຸ ວຽກງານທີ່ໄດ້ຖືກມອບຫມາຍ. ອີກປະການໜຶ່ງ ແມ່ນສ້າງຄວາມເຊື່ອໝັ້ນໃຫ້ແກ່ເຂົາເຈົ້າ ໃຫ້ເປັນທີ່ຍອມຮັບ ປະຈັກກັນຂອງອົງກອນ ແລະ ໃນສັງຄົມ ເຊິ່ງໂດຍພື້ນຖານ ຍິງ ແລະ ຊາຍ ມີຄວາມເທົ່າທຽມກັນ.

ເວົ້າສະເພາະ, ການຊຸກຍູ້ ແລະ ສົ່ງເສີມເພດຍິງ ໃນສະຖານທີ່ເຮັດວຽກ ຫຼື ໃນສັງຄົມ ແມ່ນເລີ່ມຈາກ ການເປີດກ້ວາງ ຮັບເອົາຄຳຄິດຄຳເຫັນ ແລະ ໃຫ້ໂອກາດແກ່ເພດຍິງຫຼາຍເທົ່າທີ່ຫຼາຍໄດ້ ເຊັ່ນ ໃຫ້ໂອກາດໃນການເປີດ ແລະ ປິດກອງປະຊຸມທີ່ສຳຄັນໃນອົງກອນ, ໃຫ້ໂອກາດໃນການຈັດຕັ້ງບໍລິຫານວຽກງານທີ່ສຳຄັນ. ສະນັ້ນການໃຫ້ກຽດແກ່ເພື່ອນຮ່ວມງານເພດຍິງ ຫຼື ເພດດຽວກັນຖືວ່າມີຄວາມສຳຄັນຫຼາຍ ໃນການສ້າງຄວາມເຂັ້ມແຂງໃນອົງກອນນັ້ນ. "

# ການນຳ ແມ່ຍິງ: ການບັນລຸຄວາມສະເໝີພາບໃນໄລຍະ COVID-19



**ອຳມະລາ ທຳມະວົງ**
ທີ່ປຶກສາດ້ານຄວາມປອດໄພ

" ຂ້າພະເຈົ້າຈະປະກອບສ່ວນສົ່ງເສີມແມ່ຍິງ ແລະ ທຸກຄົນໃນສະຖານທີ່ເຮັດວຽກ ໃຫ້ຮູ້ຈັກການປ້ອງກັນຕົວເອງ ແລະ ຜູ້ອື່ນບໍ່ໃຫ້ມີການບາດເຈັບ, ໃຫ້ມີຄວາມຫ້າວຫັນ ແລະ ເຂັ້ມແຂງທີ່ສາມາດເຮັດວຽກເທົ່າທຽມກັບຜູ້ຊາຍໄດ້ ໂດຍສະເພາະແມ່ນການເຮັດວຽກທີ່ໜັກກ່ຽວກັບການຂຸດເຈາະ, ເຊິ່ງເປັນວຽກງານທີ່ທ້າທາຍຫຼາຍສຳລັບຜູ້ຍິງໃນພາກສະໜາມເຊໂປນ. "






**ກູ້ ຢ່າງ**
ຫົວໜ້າສາຍງານ ບຳລຸງຮັກສາ

" ຂ້າພະເຈົ້າ ຈະເປັນຫູເປັນຕາຊ່ວຍກັນສົ່ງເສີມສິດສະເໝີພາບລະຫວ່າງຍິງ-ຊາຍ, ໃຫ້ໂອກາດ ແມ່ຍິງມີສ່ວນຮ່ວມປະກອບສ່ວນເຂົ້າໃນໜ້າທີ່ວຽກງານ ແລະ ກິດຈະກຳຕ່າງໆ. "



**ມິດຈະນາ ວົງແສນນາມ**
ວິຊາການ ພະແນກບຸກຄະລາກອນ

" ໃນຖານະແມ່ຍິງຍຸກໃຫມ່ຕ້ອງເຂັ້ມແຂງ, ຮູ້ຈັກພັດທະນາຕົນເອງ ແລະ ຈົ່ງຄົ້ນຫາໂອກາດໃນຊ່ວງວິກິດການຫາກເມື່ອໃດຫາກເກີດມີບັນຫາກໍຕ້ອງຜ່ານມັນໄປໃຫ້ໄດ້. "



**ບາວິນ ປຣະຈາປາຕີ**
ຫົວໜ້າສາຍງານການບໍລິການອາຫານ

" ຄູທີ່ດີເລີດທີ່ສຸດຂອງພວກເຮົາແມ່ນ ແມ່ ຄື ແມ່ຍິງ. ພວກເຮົາສາມາດສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ດ້ວຍການສະໜັບສະໜູນ ການສຶກສາ, ການມີວຽກເຮັດງານທຳ, ການເຄົາລົບນັບຖື, ການເປັນທີ່ປຶກສາທີ່ດີ ແລະ ການຊ່ວຍເຫຼືອແມ່ລູກອ່ອນ. "

" ອົງກອນ ແລະ ສັງຄົມ ຄວນຍົກສູງບົດບາດແມ່ຍິງຂຶ້ນ ບໍ່ວ່າ ທາງດ້ານການສຶກສາ ຫຼື ໜ້າທີ່ການງານຕ່າງໆ. "



**ບ່ອນບີ້ ພົມພັກດີ**
ຫົວໜ້າດ້ານເຕັກນິກການຊ່າງ

# ການສື່ສານ
# ເວລາໃສ່
# ຜ້າປິດປາກ-ດັງ

ຜ້າປິດປາກ-ດັງ ໄດ້ກາຍມາເປັນ "ວິຖີປົກກະຕິແບບໃໝ່" ແລະ ທັງເປັນ "ອຸປະສັກໃໝ່ຕໍ່ການສື່ສານ".

ຍ້ອນວ່າ ຜ້າປິດປາກດັງ ປິດບັງ ການສະແດງສີໜ້າຂອງພວກເຮົາ ຈຶ່ງເຮັດໃຫ້ການສື່ສານມີຄວາມຫຍຸ້ງຍາກຂຶ້ນ. ລອງຄິດຫາວິທີການໂດຍບໍ່ໃຊ້ຄຳເວົ້າ ທີ່ພວກເຮົາໃຊ້ເພື່ອ ສະແດງຄວາມຈິງໃຈ, ຄວາມໄວ້ວາງໃຈ, ການມີເຈດຕະນາທີ່ດີ ຫຼື ຄວາມສັບສົນ. ແລະ ເຖິງແມ່ນວ່າ ຜ້າປິດປາກ-ດັງນັ້ນ ມີຄວາມສຳຄັນ ໃນການສະກັດກັ້ນການລະບາດພະຍາດ ແຕ່ວ່າ ການໃສ່ຜ້າປິດປາກ-ດັງນັ້ນ ຈະເຮັດໃຫ້ການສື່ສານຄວາມຮູ້ສຶກຕ່າງໆ ມີຄວາມຫຍຸ້ງຍາກຂຶ້ນ.

ພວກເຮົາຈະສ້າງສາຍພົວພັນ ກັບເພື່ອນຮ່ວມງານເຮົາແນວໃດ ເມື່ອ ເຄິ່ງໃບໜ້າຂອງພວກເຮົາປິດໄວ້ຢູ່?

- ເລີ່ມນຳໃຊ້ "ສຽງສະເພາະຍາມໃສ່ຜ້າປິດປາກ-ດັງ". ເວົ້າແຮງກວ່າປົກກະຕິ ແລະ ສື່ ອາລົມ ດ້ວຍ ນ້ຳສຽງ ແລະ ຈັງຫວະການເວົ້າ.
- ຝຶກການຟັງຢ່າງຕັ້ງໜ້າ ໂດຍການຕອບຮັບດ້ວຍຄຳເວົ້າ ຫຼື ສຽງ ເຊັ່ນ "ແມ່ນໆ" ຫຼື "ເຂົ້າໃຈໆ" ເຖິງ ບຸກຄົນທີ່ທ່ານໂອ້ລົມນຳຢູ່.
- ນຳໃຊ້ພາສາທາງກາຍ ເຊັ່ນ ການງຶກຄໍ ຫຼື ທ່າທາງຕ່າງໆ ແທນການນຳໃຊ້ສີໜ້າ ເພື່ອສື່ສານຂໍ້ຄວາມທີ່ລະອຽດອ່ອນ.
- ຍິ້ມດ້ວຍສາຍຕາ. ການຍິ້ມອາດແມ່ນ ເຄື່ອງມືການສື່ສານທີ່ສຳຄັນທີ່ສຸດ, ເພາະສະນັ້ນ ຈົ່ງພະຍາຍາມຍິ້ມດ້ວຍຕາຂອງທ່ານ. ມັນອາດຮູ້ສຶກແປກໆ ຫຼື ບໍ່ເປັນທຳມະຊາດ, ແຕ່ໃຫ້ເຮັດແບບຕັ້ງໃຈ ຍິບຕາຂອງທ່ານເບິ່ງ.

ຜ້າປິດປາກ-ດັງ ຈະເປັນສ່ວນໜຶ່ງຂອງຊີວິດພວກເຮົາ ໃນອະນາຄົດອັນໃກ້ນີ້, ແຕ່ຖ້າເຮົາພະຍາຍາມຕື່ມ ພວກເຮົາກໍຈະສາມາດ ຜ່ານຜ່າ ຄວາມທ້າທາຍໃນການສື່ສານ ທີ່ຕິດພັນກັບຜ້າປິດປາກ-ດັງ.

*ແຫຼ່ງຂໍ້ມູນ: ວິທີການສ້າງສາຍພົວພັນ ໃນຍາມ ໃສ່ຜ້າປິດປາກ-ດັງ, HBR, 2020.*



# ວັນ
# ເຫດການສຳຄັນ

**4**
**ເມສາ**
ວັນໂຄສະນາສາກົນ ເພື່ອຕ້ານລະເບີດບໍ່ທັນແຕກ

**14-16**
**ເມສາ**
ປີໃໝ່ລາວ

**1**
**ພຶດສະພາ**
ວັນກຳມະກອນສາກົນ

# ສໍາພາດເຈາະເລິກ ແລະ ສ່ວນຕົວ ກັບ ຄາຣ ເບເກ້ ດູລີ້

## ຮອງຜູ້ຈັດການໃຫຍ່-ຝ່າຍການດຳເນີນງານ



ພວກເຮົາສືບຕໍ່ ນໍາສະເໜີບົດສໍາພາດສະມາຊິກ ຜູ້ບໍລິຫານ ແລະ ທີມງານຊ່ຽວຊານໃໝ່, ມາແບ່ງປັນ ໃຫ້ກັບຜູ້ອ່ານຂອງພວກເຮົາ. ໃນສະບັບນີ້ ພວກເຮົາ ນໍາສະເໜີ ທ່ານ ຄາຣ ເບີເກີ້ ດູລີ້ ທີ່ໄດ້ເລີ່ມມາຮ່ວມ ເຮັດວຽກນໍາ ລຊມລ ເປັນ ຮອງຜູ້ຈັດການໃຫຍ່ ຝ່າຍ ການດໍາເນີນງານ ຕັ້ງແຕ່ ເດືອນ ກັນຍາ 2020 ເປັນ ຕົ້ນມາ. ທ່ານ ຄາຣ ມີປະສົບການດ້ານການດໍາເນີນ ງານຫຼາຍກວ່າ 30 ປີ ໃນຫຼາຍໆປະເພດແຮ່ທາດ ແລະ ໂລຫະ ພ້ອມທັງໄດ້ນໍາພາໂຄງການຂຸດຄົ້ນບໍ່ແຮ່ແບບ ເປີດໃຫຍ່ໆຫຼາຍແຫ່ງຢູ່ໃນຫຼາຍພາກພື້ນ. ຄາຣ ຍຶດຖື ການສື່ສານທີ່ດີ, ການເຮັດວຽກເປັນ ທີມ ແລະ ການ ປັບປຸງຢ່າງຕໍ່ເນື່ອງ ເປັນປັດໃຈສໍາຄັນ ໃນການບັນລຸ ຄວາມສໍາເລັດ ແລະ ຄວາມດີເລີດ. ຫຼັກການໜຶ່ງ ທີ່ສໍາຄັນໃນການດໍາລົງຊີວິດ ທີ່ພວກເຮົາ ທຸກຄົນສາມາດເອົາໄປນໍາໃຊ້ ແມ່ນ ເລື່ອງ "ເວລາ" ຄື ເຮັດໃຫ້ທຸກໆ ວິນາທີຂອງຊີວິດມີຄວາມໝາຍ.

***ຊ່ວຍແນະນໍາຕົວ ແລະ ປະສົບການຂອງທ່ານ ກ່ອນທີ່ເຂົ້າມາເຮັດວຽກກັບ ລຊມລ.***

ຂ້າພະເຈົ້າເປັນຄົນສະວິດ ແຕ່ມາ ໃຫຍ່ຢູ່ ອາຟຣິກາໃຕ້. ຂ້າພະເຈົ້າຮຽນ ຈົບວິສະວະກໍາການຂຸດຄົ້ນບໍ່ແຮ່. ຂ້າພະເຈົ້າໄດ້ເຮັດວຽກໃນຫຼາຍປະເທດ ເປັນຕົ້ນ ຢູ່ ອາຟຣິກາ, ອິນເດຍ ສະຫະລັດອາເມຣິກາ ແລະ ປາປົວນິວ ກີນີ ກ່ອນທີ່ໄດ້ມາເຮັດຢູ່ ບໍ່ຄໍາ-ທອງ ເຊໂປນ. ປະສົບການຂອງຂ້າພະເຈົ້າ ສ່ວນໃຫຍ່ແມ່ນໂຄງການຂຸດຄົ້ນບໍ່ແຮ່ເປີດ ແລະ ການພັດທະນາບໍ່ໃໝ່ ສອງແຫ່ງ.

***ມີສິ່ງທ້າທາຍໃດແດ່ທີ່ທ່ານໄດ້ພົບພໍ້ຕະຫຼອດໄລຍະການເຮັດວຽກ ແລະ ທ່ານ ຜ່ານຜ່າມາໄດ້ແນວໃດ?***

ຕະຫຼອດອາຊີບ ຂ້າພະເຈົ້າໄດ້ແກ້ໄຂສິ່ງ ທ້າທາຍສໍາຄັນຫຼາຍດ້ານນັບແຕ່ເລື່ອງຊ່ອງ ຫວ່າງດ້ານຄວາມປອດໄພ, ສິ່ງແວດລ້ອມ, ສັງຄົມ, ຄຸນນະພາບຕະຫຼອດຮອດຜະລິດ ຕະພາບການດໍາເນີນງານ. ວິທີການຮັບມື ແກ້ໄຂແມ່ນຄ້າຍຄືກັນໃນທຸກໆກໍລະນີ ເຊິ່ງ ຮຽກຮ້ອງໃຫ້ ສ້າງຄວາມເຂົ້າໃຈກ່ຽວກັບ ບັນຫາຜ່ານການວິເຄາະ ແລະ ຮັບຟັງຜູ້ອື່ນ, ການວາງແຜນໂດຍການມີສ່ວນຮ່ວມຂອງ ທີມງານ, ຮັບປະກັນວ່າມີຊັບພະຍາກອນມາ ຮອງຮັບແຜນ ແລະ ປະຕິບັດແຜນຜ່ານການ ປະສານງານທີ່ແໜ້ນແຟ້ນ ແລະ ການສື່ສານ ທີ່ບໍ່ຂ້ອງຄາ. ສຸດທ້າຍ ແມ່ນການມີຄວາມ ພາກພຽນຮ່ວມກັນພາຍໃນທີມງານ ເພື່ອ ປະຕິບັດແຜນໃຫ້ສໍາເລັດຜົນ.

***ຫຼັກການສໍາຄັນທີ່ທ່ານຍຶດຖືໃນບົດບາດ ຮອງຜູ້ຈັດການໃຫຍ່ ແມ່ນຫຍັງ?***

ການບາດເຈັບເທົ່າສູນແມ່ນເປັນໄປໄດ້, ສຸມ ໃສ່ສິ່ງທີ່ສໍາຄັນ, ມີລະບຽບວິໄນ ແລະ ຄວາມ ສໍາເລັດຈະບັນລຸໄດ້ກໍຕໍ່ເມື່ອ ມີການເຮັດວຽກ ເປັນທີມ ແລະ ການສື່ສານທີ່ມີປະສິດທິຜົນ. ສຸດທ້າຍ, ໃຜກໍສາມາດປັບປຸງ-ເຮັດໃຫ້ດີຂຶ້ນ ກວ່າເກົ່າເລື້ອຍໆ ເຊິ່ງ ບໍ່ແມ່ນເຫດການ ແຕ່ ເປັນ ເສັ້ນທາງ ສະແຫວງຫາຄວາມດີເລີດ!

***ໃນວາລະທີ່ທ່ານເປັນຮອງຜູ້ຈັດການໃຫຍ່, ທ່ານຕ້ອງການບັນລຸຫຍັງ ໃນໄລຍະສັ້ນ ແລະ ໄລຍະຍາວ?***

ຂ້າພະເຈົ້າຫວັງວ່າຈະສາມາດປູກຝັງຄວາມ ຮູ້ສຶກ-ແນວຄິດ ໃນການບັນລຸການປະຕິບັດ ງານທີ່ມີຄຸນນະພາບຮອບດ້ານ. ການເຮັດ ໃຫ້ຖືກຕ້ອງຄັ້ງທໍາອິດ ແລະ ທຸກໆຄັ້ງ ໝາຍ ວ່າ ບໍ່ມີການສ້າງສິ່ງເສດເຫຼືອ (ການຂາດ ປະສິດທິພາບ)!



***ທ່ານປະທັບໃຈອັນໃດກ່ຽວກັບ ບໍ່ຄໍາ-ທອງເຊໂປນ ຫຼື ສປປ ລາວ ໃນໄລຍະຫຼາຍເດືອນຜ່ານມາ?***

ການຮຽນຮູ້ ສປປ ລາວ ແລະ ວັດທະນະທໍາ ລາວ ເປັນປະສົບການທີ່ວິເສດຫຼາຍ ແລະ ຍັງມີອີກຫຼາຍຢ່າງໃຫ້ຮຽນໃຫ້ລອງ. ເປັນ ຫຍັງທີ່ມີຄຸນຄ່າທີ່ສຸດ! ຢູ່ບໍ່ຄໍາ-ທອງເຊໂປນ ຂ້າພະເຈົ້າປະທັບໃຈໃນ ລະດັບວັດທະນະທໍາ ດ້ານຄວາມປອດໄພທີ່ສູງ ແລະ ຍຸດທະສາດ ການເຕີບຕົວແບບບຸກທະລຸ ເພື່ອໃຫ້ກ້າວ ມາເປັນ ບໍລິສັດຜະລິດຄໍາທີ່ນໍາໜ້າ.

***ໃນໂອກາດ ວັນແມ່ຍິງສາກົນນີ້, ທ່ານຄິດແນວໃດກ່ຽວກັບຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມໃນສະຖານທີ່ເຮັດວຽກ?***

ຂ້າພະເຈົ້າຄິດວ່າເປັນປະເດັນທີ່ຫຼາຍໆ ບໍລິສັດ ສາມາດເອົາໃຈໃສ່ເຮັດໃຫ້ດີກວ່າ ເກົ່າ. ເປັນທີ່ໜ້າຍິນດີ ທີ່ເຫັນແມ່ຍິງເຂົ້າມາ ເຮັດວຽກໃນອຸດສາຫະກໍາບໍ່ແຮ່ຫຼາຍຂຶ້ນ ເຊິ່ງ ຕັ້ງແຕ່ໃດມາຈະມີແຕ່ຜູ້ຊາຍເປັນສ່ວນໃຫຍ່. ຂັ້ນຕໍ່ໄປ ທີ່ ຂ້າພະເຈົ້າຫວັງຈະໄດ້ເຫັນແມ່ນ ໃຫ້ແມ່ຍິງຂຶ້ນສູ່ຕໍາແໜ່ງທີ່ອາວຸໂສກວ່າເກົ່າ ຫຼາຍຂຶ້ນ.

***ທ່ານຄິດວ່າ ອົງການຕ່າງໆຈະເຮັດແນວໃດໄດ້ແດ່ເພື່ອສົ່ງເສີມແມ່ຍິງໃນສະຖານທີ່ເຮັດວຽກ?***

ຊຸກຍູ້ໃຫ້ການນໍາໃນອົງກອນ ໃຫ້ໂອກາດແມ່ ຍິງໄດ້ອອກຄວາມເຫັນ ແລະ ໃຫ້ໂອກາດທີ່ ມີຄວາມໝາຍໃຫ້ແມ່ຍິງປະສົບຜົນສໍາລັບ. ສະໜັບສະໜູນແມ່ຍິງດ້ວຍການເປີດໂອກາດ ໃຫ້ຮ່ວມການຝຶກອົບຮົມ-ໄດ້ຮັບຄໍາປຶກສາ ແນະນໍາຢ່າງຕັ້ງໜ້າ.

***ປັດຊະຍາການເຮັດວຽກ ແລະ ດໍາລົງຊີວິດຂອງທ່ານ ແມ່ນຫຍັງ?***

ເຮັດວຽກເຕັມທີ່, ຫຼິ້ນ-ມ່ວນຊື່ນເຕັມທີ່ (ແລະ ຕາມລໍາດັບນັ້ນ). ໃຫ້ຖືເອົາເວລາເປັນສິ່ງທີ່ ລໍ້າຄ່າຍ້ອນມັນຈໍາກັດ. ສະນັ້ນໃຊ້ເວລາໃຫ້ ເປັນປະໂຫຍດ!

# 5 ນາທີ ກັບ ວິເມພາ ວີໄລພອນ

## ວິສະວະກອນປຸງແຕ່ງ

ຕອນທີ່ເປັນບັນດິດໃໝ່ ຈົບສາຂາວິສະວະກຳ ຈາກ ປະເທດ ອົດສະຕຣາລີ, ວິເມພາ ໄດ້ວຽກທຳອິດກັບ ລຊມລ ໃນປີ 2019 ເປັນ ວິສະວະກອນປຸງແຕ່ງ. ຢູ່ ລຊມລ, ລາວມັກທີ່ຈະມີສິ່ງທ້າທາຍໃຫ້ຮັບມືໃນແຕ່ລະວັນ ເພື່ອໃຫ້ລາວ ນຳໃຊ້ຄວາມສ້າງສັນ ແລະ ທັກສະການແກ້ໄຂບັນຫາໃນພາກປະຕິບັດຕົວຈິງ. ຄວາມຫ້າວຫັນຕັ້ງໜ້າເຮັດວຽກ ແລະ ການຈັດວາງບູລິມະສິດວຽກ ເປັນກະແຈສຳຄັນແຫ່ງຄວາມສຳເລັດຂອງລາວ. ວິເມພາ ເຊື່ອວ່າທຸກຢ່າງທີ່ເກີດຂຶ້ນແມ່ນມີເຫດຜົນ ກໍຄື ເພື່ອການເຕີບໂຕ ແລະ ເພື່ອໃຫ້ເກັບກ່ຽວ 'ເສັ້ນທາງ-ປະສົບການ' ຫຼາຍກວ່າ 'ຜົນໄດ້ຮັບ' ຍ້ອນວ່າ ນັ້ນແມ່ນບໍ່ເກີດຂອງ 'ການຮຽນຮູ້'.



### ຊ່ວຍແນະນຳຕົວ ແລະ ປະສົບການຂອງທ່ານກ່ອນທີ່ເຂົ້າມາເຮັດວຽກກັບ ລຊມລ.

ກ່ອນມາເຮັດວຽກກັບ ລຊມລ ໃນປີ 2019, ຂ້ອຍສຶກສາປະລິນຍາຕີສາຂາວິສະວະກຳ (ປຸງແຕ່ງເຄມີ) ຢູ່ ເມືອງ ບຣິສເບິນ ອົດສະຕຣາລີ. ຂ້າພະເຈົ້າໄດ້ເກັບກ່ຽວປະສົບການຊີວິດໃນໄລຍະທີ່ເຮັດວຽກຢູ່ຕ່າງປະເທດ. ໃນເວລາພັກຮຽນ, ຂ້າພະເຈົ້າກໍໄດ້ເດີນທາງ, ຮ່ວມທັດສະນະສຶກສາແລກປ່ຽນ ແລະ ເຮັດວຽກເພີ່ມທັງພາຍນອກ ແລະ ພາຍໃນມະຫາວິທະຍາໄລ. ກ່ອນໄປສຶກສາຢູ່ອົດສະຕຣາລີ, ຂ້າພະເຈົ້າໄດ້ເຮັດວຽກເປັນຜູ້ຊ່ວຍຄູ ຢູ່ ສະຖາບັນສອນພາສາອັງກິດແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ.

### ທ່ານມັກສິ່ງໃດຫຼາຍທີ່ສຸດໃນໜ້າວຽກຂອງທ່ານ?

ລຊມລ ເປັນບ່ອນເຮັດວຽກວິຊາຊີບທຳອິດ ທີ່ຂ້າພະເຈົ້າໄດ້ນຳເອົາຄວາມຮູ້ທິດສະດີທີ່ຮຽນມາຈາກມະຫາວິທະຍາໄລ ມາໃຊ້ໃນພາກປະຕິບັດຕົວຈິງ. ຂ້າພະເຈົ້າມັກແກ້ໄຂບັນຫາ ແລະ ບໍ່ມີມື້ໃດທີ່ໜ້າເບື່ອຢູ່ພາກສະໜາມ. ດັ່ງທີ່ພວກເຮົາເຫັນ, ຂອບເຂດໜ້າວຽກໄດ້ຂະຫຍາຍກວ້າງອອກ ໃນຂະນະທີ່ພວກເຮົາຫັນຈາກ ການສຸມໃສ່ຜະລິດທອງ ສູ່ການຜະລິດຄຳ. ຂ້າພະເຈົ້າມັກຫຼາຍທີ່ສຸດເວລາພວກເຮົາເປັນທີມ ສາມາດນຳໃຊ້ຄວາມສ້າງສັນໃນຂະບວນການແກ້ໄຂບັນຫາຢູ່ໂຮງງານ ເຊິ່ງໄດ້ກາຍເປັນສິ່ງທີ່ເຮັດປະຈຳວັນ. ຂ້າພະເຈົ້າມັກວຽກຍ້ອນຂ້າພະເຈົ້າສາມາດແລກປ່ຽນ ແລະ ຮຽນຮູ້ທັກສະຕ່າງໆຈາກເພື່ອນຮ່ວມງານ, ພວກເຮົາຮຽນຈາກກັນ ແລະ ກັນ. ຂ້າພະເຈົ້າເຊື່ອວ່າພວກເຮົາຈະພັດທະນາເຕີບຕົວໄດ້ເມື່ອຢູ່ອ້ອມຮອບດ້ວຍບຸກຄົນທີ່ມີປະສົບການສູງ ແລະ ເຖິງແມ່ນວ່າ ພວກເຮົາອາດຕ້ອງເຮັດໃນສິ່ງທີ່ບໍ່ລຶ້ງເຄີຍແຕ່ກໍມ່ວນດີ.

### ທ່ານຈະນຳຫຼັກການພື້ນຖານໃດແດ່ເຂົ້າມາໝູນໃຊ້ໃນໜ້າວຽກຂອງທ່ານເພື່ອຊ່ວຍໃຫ້ ລຊມລ ປະສົບຜົນສຳເລັດ?

ບາງຫຼັກການພື້ນຖານທີ່ຂ້າພະເຈົ້າຍຶດຖືສະເໝີແມ່ນ ຄວາມຫ້າວຫັນຕັ້ງໜ້າ ແລະ ການວາງບູລິມະສິດໃນທຸກໆຂົງເຂດໜ້າວຽກ ບໍ່ວ່າຈະດ້ານວິຊາການ, ການສື່ສານ ຫຼື ການວາງແຜນ. ອັນນີ້ຈະຊ່ວຍຂ້າພະເຈົ້າມີຈຸດສຸມ ທີ່ສອດຄ່ອງກັບເປົ້າໝາຍ ໂດຍສະເພາະ ເວລາເຮັດວຽກເຊິ່ງ ພວກເຮົາອາດຕ້ອງຈັດການກັບໜ້າວຽກທີ່ລົ້ນມືກໍເປັນໄດ້. ຖ້າເຮົາປະຕິບັດແບບນີ້ຢ່າງສະໝໍ່າສະເໝີ, ຈຸດສຸມຂອງພວກເຮົາກໍຈະກວ້າງອອກເຮັດໃຫ້ເສຍຫຼັກ.

### ໃນຖານະທີ່ເປັນແມ່ຍິງທີ່ເຮັດວຽກໃນອຸດສາຫະກຳທີ່ມີຜູ້ຊາຍເປັນສ່ວນໃຫຍ່ ຄື ບໍ່ແຮ່, ທ່ານພົບພໍ້ກັບສິ່ງທ້າທາຍໃດແດ່ ແລະ ຜ່ານຜ່າມັນແນວໃດ?

ບໍ່ແຮ່ເປັນອຸດສາຫະກຳທີ່ຫຼາກຫຼາຍ ລວມເອົາຫຼາກຫຼາຍຂົງເຂດວຽກງານ, ຄວາມຊຳນານງານ ແລະ ວັດທະນະທຳ. ໃນຂະນະທີ່ພວກເຮົາອາດເຮັດວຽກເພື່ອບັນລຸເປົ້າໝາຍດຽວກັນ, ການສື່ສານອາດເປັນສິ່ງທ້າທາຍຫຼາຍຍ້ອນ ທຸກຄົນອາດມີຄວາມຄິດແຕກຕ່າງກັນກ່ຽວກັບ "ຄວາມສຳເລັດ". ວິທີການທີ່ດີທີ່ສຸດແມ່ນ ການສື່ສານໃຫ້ເຂົ້າໃຈງ່າຍ ແລະ ສ້າງສັນ ເຊິ່ງ ຮຽກຮ້ອງ ການຮັບຟັງຫຼາຍໆ, ການເກັບກຳຂໍ້ມູນ, ການລະດົມສະໝອງ ແລະ ການປະຕິບັດຕາມແຜນ.

### ທ່ານມີຄວາມເຫັນແນວໃດຕໍ່ກັບ ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງພະນັກງານ ໃນ ລຊມລ?

ໃນຂະນະທີ່ແມ່ຍິງໃນຕຳແໜ່ງວິຊາການນັ້ນ ໜ້ອຍກວ່າຜູ້ຊາຍໃນອຸດສາຫະກຳບໍ່ແຮ່, ຂ້າພະເຈົ້າຫວັງວ່າ ຈະສາມາດເປັນແຮງຈູງໃຈໃຫ້ແມ່ຍິງອື່ນໆ ຫັນມາເຮັດວຽກໃນ ອຸດສາຫະກຳນີ້. ຖ້າມີຄວາມຕັ້ງໃຈ ແລະ ໂອກາດ, ຂ້າພະເຈົ້າຄິດວ່າທຸກຄົນເຮັດໄດ້. ຂ້າພະເຈົ້າຄິດວ່າ ອຸດສາຫະກຳບໍ່ແຮ່ໃນ ລາວຈະໄດ້ຜົນປະໂຫຍດຫຼາຍ ຈາກ ການດຶງດູດຄົນໜຸ່ມນ້ອຍທີ່ມີຄວາມສາມາດ - ບໍ່ວ່າ ແມ່ຍິງ ຫຼື ຜູ້ຊາຍ - ໃຫ້ເຂົ້າມາເຮັດວຽກໃນຂະແໜງການນີ້.

### ທ່ານມີຄຳແນະນຳແນວໃດໃຫ້ກັບຜູ້ທີ່ພວມຫາໂອກາດເຂົ້າມາເຮັດວຽກໃນອຸດສາຫະກຳບໍ່ແຮ່, ໂດຍສະເພາະສຳລັບແມ່ຍິງ?

ຄຳແນະນຳຂອງຂ້າພະເຈົ້າເຖິງທຸກຄົນ ແມ່ນໃຫ້ ປັບຕົວ ແລະ ເປີດໃຈ. ວຽກບໍ່ແຮ່ ມີຫຼາກຫຼາຍໜ້າວຽກ ແລະ ເຕັກໂນໂລຊີກໍກ້າວໜ້າໄປເລື້ອຍໆ ເຊິ່ງຮຽກຮ້ອງໃຫ້ພວກເຮົາ ເຮັດໄດ້ຫຼາຍໜ້າວຽກ ແລະ ບໍລິຫານເວລາຢ່າງດີ. ອຸດສາຫະກຳບໍ່ແຮ່ເປີດໂອກາດໃຫ້ພັດທະນາວິຊາຊີບ. ຂ້າພະເຈົ້າເວົ້າໄດ້ວ່າ ທັກສະ ແລະ ປະສົບການທີ່ໄດ້ຈາກ ອຸດສາຫະກຳນີ້ ແມ່ນສາມາດຖ່າຍທອດໄປຍັງ ອຸດສາຫະກຳອື່ນໆ ກໍຄືຊີວິດປະຈຳວັນ.

### ທ່ານມີຄະຕິປະຈຳໃຈແນວໃດ?

ຂ້າພະເຈົ້າເຊື່ອວ່າ ທຸກສິ່ງທີ່ເກີດກັບເຮົາແມ່ນເພື່ອການເຕີບຕົວຂອງເຮົາເອງ. ພວກເຮົາຮຽນຮູ້ຈາກ ຜົນສຳເລັດ ແລະ ຄວາມລົ້ມເຫຼວ. ອັນທີ່ສຳຄັນໄປກວ່ານັ້ນ ແມ່ນໃຫ້ເຮົາ ຮຽນຮູ້ ແລະ ມ່ວນຊື່ນກັບຂະບວນການ ແທນທີ່ຈະ ສຸມໃສ່ຜົນຮັບ. ຖ້າເຮັດໄດ້ແນວນັ້ນ, ພວກເຮົາຈະຮຽນຮູ້ໄດ້ຫຼາຍທີ່ສຸດ. ໃນຂະນະທີ່ ການຢຸດສະຫງັກ ແລະ ເສຍຫຼັກນັ້ນອາດເກີດຂຶ້ນງ່າຍ, ການເບິ່ງຄືນຫຼັງເສັ້ນທາງຈາກຕົ້ນເຖິງຈຸດທີ່ເຮົາມາຮອດນີ້ ອາດເປັນແຮງບັນດານໃຈໃຫ້ເຮົາສູ້ຕໍ່ໄປ.



# ຄົ້ນພົບ ວັດຖຸບູຮານ ອາຍຸເກົ່າແກ່ 6 000ປີ ໃກ້ບໍ່ຄຳ ເຊໂປນ



ໃນບໍ່ດົນມານີ້, ພວກເຮົາໄດ້ຄົ້ນພົບວັດຖຸບູຮານອາຍຸເກົ່າແກ່ 6.000 ປີ ຢູ່ ບ້ານນ້ຳປາເຄນ. ວັດຖຸບູຮານເຫຼົ່ານີ້ປະກອບດ້ວຍ ເຄື່ອງມື ແລະ ຂວັນຍຸກຫີນຂັດ ເຊິ່ງເປັນຍຸກທີ່ ສັງຄົມມະນຸດໄດ້ເລີ່ມຜະລິດເຄື່ອງມືແທດເໝາະກັບຄວາມຕ້ອງການໃນຊີວິດປະຈຳວັນ ແລະ ວຽກງານກະສິກຳກ່ອນທີ່ກ້າວເຂົ້າສູ່ຍຸກໂລຫະ ກໍຄື ຍຸກການຮູ້ຄົ້ນພົບ ແລະ ນຳໃຊ້ແຮ່ທາດ ແລະ ການຄ້າຂາຍໃນພາກພື້ນ.













ການຄົ້ນພົບໃໝ່ເຫຼົ່ານີ້ ແມ່ນສານຕໍ່ຈາກການຮ່ວມມືມາໄດ້ 2 ທົດສະຫວັດ ລະຫວ່າງ ລຊມລ, ກົມມໍລະດົກຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລເຈມສ໌ ຄຸກ ຂອງ ອົດສະຕຣາລີ. ການຮ່ວມມືດັ່ງກ່າວ ແມ່ນການ ສະໜັບສະໜູນວຽກງານພາກສະໜາມ ທີ່ເປັນການເຕົ້າໂຮມການຮ່ວມມືທີ່ມີລັກສະນະພິເສດໃນລະດັບ ຊຸມຊົນທ້ອງຖິ່ນ, ປະເທດ ແລະ ສາກົນ. ອາສາສະໝັກ ຈາກ ນະຄອນຫຼວງວຽງຈັນ, ປະຊາຊົນທ້ອງຖິ່ນ, ນັກສຶກສາຈາກ ອົດສະຕຣາລີ ແລະ ນັກສຶກສາລາວ, ນັກບູຮານຄະດີ ແລະ ເຈົ້າໜ້າທີ່ຈາກກົມມໍລະດົກ ທີ່ມາປະຈຳຢູ່ ບໍ່ຄຳ-ທອງເຊໂປນ ໄດ້ຮ່ວມມືກັນຢ່າງໃກ້ຊິດ ໃນວຽກງານຄົ້ນຄວ້າຕ່າງໆ.

ການຄົ້ນພົບໃໝ່ຄັ້ງນີ້ ແມ່ນຜົນຂອງວຽກງານພາກສະໜາມ ລະຫວ່າງ ວັນທີ 9 ຫາ 25 ມັງກອນ 2021 ແລະ ທັງເປັນວາລະໜຶ່ງຂອງ ການລົງພາກສະໜາມ 4 ຄັ້ງ ຕໍ່ ປີ, ພາຍໃຕ້ການຮ່ວມທີ່ດັ່ງກ່າວນັ້ນ.

ນັບຕັ້ງແຕ່ປີ 2008 ເປັນຕົ້ນມາ, ບໍລິສັດ ລຊມລ ໄດ້ລົງທຶນຫຼາຍກວ່າ US$1,5 ລ້ານ ເຂົ້າໃນການສະໜັບສະໜູນ ການອະນຸລັກປະຫວັດສາດລາວ ແລະ ມໍລະດົກທາງວັດທະນະທຳ ສຳລັບຄົນຮຸ່ນຕໍ່ໄປ.

ໃນໄລຍະຜ່ານມາ ແມ່ນໄດ້ມີການຄົ້ນພົບວັດຖຸບູຮານສຳຄັນຫຼາຍອັນ ຢູ່ ບໍ່ຄຳ-ທອງເຊໂປນ. ພວກເຮົາເຊື່ອວ່າ ການຂຸດຄົ້ນ-ປຸງແຕ່ງແຮ່ບູຮານໃນຂົງເຂດບໍ່ຄຳ-ທອງເຊໂປນນີ້ໄດ້ສືບຕໍ່ມາເຖິງປະມານ 1.300 ປີກ່ອນ (ປະມານ ຄ.ສ 700) ເຊິ່ງ ເປັນໄລຍະທີ່ ຜູ້ຄົນໄດ້ຂຸດຄົ້ນແຮ່ທອງທີ່ອຸດົມສົມບູນ ຢູ່ເຂດທີ່ຮູ້ກັນວ່າ 'ເປີນເບົ້າຫູ່' ແລະ 'ທົ່ງນາເຫືອກ' ແລ້ວໄດ້ນຳໄປປຸງແຕ່ງ ແລະ ແລກປ່ຽນ. ການສັນນິຖານນີ້ ແມ່ນມາຈາກ ກາກບອນທີ່ພົບໃນຝາກະແຕະໄມ້ໄຜ່ຈາກຂຸມບໍ່ແຮ່ບູຮານໃນຕະກອນຕົມທີ່ຢູ່ເລິກໄປຈາກໜ້າດິນລະຫວ່າງ 10 ຫາ 40 ແມັດ.

ການຂຸດຄົ້ນບໍ່ແຮ່ ເປັນປັດໃຈສຳຄັນໃນການພັດທະນາພົນລະເມືອງ ແລະ ສັງຄົມມາແຕ່ປະຫວັດສາດ. ການຂຸດຄົ້ນ ຍັງຈະດຳເນີນຕໍ່ໄປ ແລະ ພວກເຮົາຫວັງວ່າ ຈະໄດ້ເຜີຍແຜ່ການຄົ້ນພົບອັນໜ້າຕື່ນເຕັ້ນກວ່າເກົ່າ ກ່ຽວກັບ ວັດທະນະທຳ ແລະ ປະຫວັດສາດລາວ.



# ກອງທຶນພັດທະນາທ້ອງຖິ່ນ ເລັ່ງໃສ່ ປັບປຸງຊີວິດການເປັນຢູ່ຂອງຊຸມຊົນແບບຍືນຍົງ

**5 ທັນວາ 2020 -** ບໍລິສັດ ລຊມລ ໄດ້ມອບ 9 ໂຄງການພາຍໃຕ້ ກອງທຶນພັດທະນາທ້ອງຖິ່ນຂອງບໍລິສັດ ມູນຄ່າລວມທັງໝົດ US$831.982 ໃຫ້ແກ່ເມືອງວິລະບູລີ, ແຂວງສະຫວັນນະເຂດ. ໂຄງການດັ່ງກ່າວເປັນສ່ວນໜຶ່ງໃນຄວາມມຸ່ງໝັ້ນທີ່ກຳນົດໃນ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ ສຳລັບຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ການພັດທະນາຂອງໂຄງການເຊໂປນ. ຈຸດປະສົງຂອງກອງທຶນພັດທະນາທ້ອງຖິ່ນ ແມ່ນເພື່ອຮັບປະກັນໃຫ້ຊຸມຊົນທ້ອງຖິ່ນໄດ້ຮັບຜົນປະໂຫຍດຈາກຖະໜົນຫົນທາງທີ່ໄດ້ຮັບການປັບປຸງ ແລະ ມີຄວາມປອດໄພຂຶ້ນ, ການຮັບປະກັນດ້ານສະບຽງອາຫານ, ການສຶກສາ ແລະ ສາທາລະນະສຸກ.

9 ໂຄງການມີ: ການປັບປຸງເສັ້ນທາງ 6 ໂຄງການ ລວມທັງ ເສັ້ນທາງ 28A ໃນເມືອງວິລະບູລີ (US$668.982), ໄຟເຍືອງທາງລະບົບພະລັງງານແສງຕາເວັນ (US$63.000), ການຂະຫຍາຍເນື້ອທີ່ການຜະລິດເຂົ້າໃຫ້ແກ່ປະຊາຊົນໃກ້ບໍ່ແຮ່ (US$15.000) ແລະ ເຄື່ອງເອັກສະເຣ (X-Ray) ໃຫ້ແກ່ໂຮງໝໍເມືອງວິລະບູລີ (US$85.000).

**ທ່ານ ສະໝານ ອະເນກາ ຮອງຜູ້ຈັດການໃຫຍ່ ບໍລິສັດ ລຊມລ** ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈ ຕໍ່ກັບການປະກອບສ່ວນໃນການພັດທະນາເມືອງວິລະບູລີ."

ທ່ານ ກ່າວຕື່ມອີກວ່າ "ການສືບຕໍ່ມຸ່ງໝັ້ນໃນການປະກອບສ່ວນນີ້ ຈະຊ່ວຍໃນການຮັບປະກັນ ຊີວິດການເປັນຢູ່ທີ່ດີ ຂອງຊຸມຊົນໃຫ້ມີຄວາມໝັ້ນຄົງ ພາຍຫຼັງສິ້ນສຸດອາຍຸການບໍ່ແຮ່."





ນັບຕັ້ງແຕ່ ປີ 2003, ກອງທຶນພັດທະນາທ້ອງຖິ່ນໄດ້ປະກອບສ່ວນກວ່າ US$13 ລ້ານ ເຂົ້າໃນການປັບປຸງໂຄງລ່າງພື້ນຖານ, ສຸຂະພາບຊຸມຊົນ, ການສຶກສາສຳລັບຄົນຮຸ່ນໃໝ່ ແລະ ການຮັບປະກັນສະບຽງອາຫານ. ກອງທຶນພັດທະນາທ້ອງຖິ່ນ ຊ່ວຍອຳນາດການປົກຄອງເມືອງວິລະບູລີ ໃນການຄຸ້ມຄອງສັງຄົມ ແລະ ຜົນກະທົບທີ່ເກີດຈາກກິດຈະກຳບໍ່ແຮ່ ແລະ ສະໜັບສະໜູນການປັບປຸງຄຸນນະພາບຊີວິດຂອງຊຸມຊົນໃຫ້ດີຂຶ້ນເລື້ອຍໆ.

**ທ່ານ ຄຳຜຸຍ ສີບຸນເຮືອງ, ເຈົ້າເມືອງວິລະບູລີ** ກ່າວວ່າ: "ຍ້ອນການສະໜັບສະໜູນຈາກບໍລິສັດ ລຊມລ ໂດຍຜ່ານກອງທຶນພັດທະນາທ້ອງຖິ່ນ, ການເຂົ້າເຖິງແຫຼ່ງນ້ຳສະອາດ ແລະ ສຸຂະອະນາໄມ, ໂຄງລ່າງພື້ນຖານ, ສຸຂະພາບ, ໄຟຟ້າ, ການສຶກສາ, ກະສິກຳ ແລະ ການປົກປັກຮັກສາມໍລະດົກວັດທະນະທຳ ໃນເມືອງວິລະບູລີ ໄດ້ມີຄວາມຄືບໜ້າເປັນກ້າວໆ."

ທ່ານ ກ່າວຕື່ມອີກວ່າ "ຕາງໜ້າອຳນາດການປົກຄອງ ແລະ ປະຊາຊົນຊາວເມືອງວິລະບູລີ, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ຕໍ່ກັບ ບໍລິສັດ ລຊມລ ໃນການສະໜັບສະໜູນການພັດທະນາເມືອງວິລະບູລີ ຂອງພວກຂ້າພະເຈົ້າ."

ການປະກອບສ່ວນຂອງກອງທຶນພັດທະນາທ້ອງຖິ່ນ ຂອງ ລຊມລ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນໄລຍະຜ່ານມາ ນັບຕັ້ງແຕ່ເລີ່ມການດຳເນີນງານ ຈາກ US$96.000 ເປັນ US$750.000 ຕໍ່ປີ ເພື່ອຫລຸດຜ່ອນຜົນກະທົບຈາກ ການຂະຫຍາຍໂຄງການບໍ່ແຮ່. ການປະກອບສ່ວນດັ່ງກ່າວນີ້ຈະສືບຕໍ່ໄປອີກຢ່າງໜ້ອຍ 10 ປີ ເພື່ອເປັນການປູພື້ນຖານທີ່ແໜ້ນໜາໃນການພັດທະນາສັງຄົມແບບຍືນຍົງໃນເຂດອ້ອມຂ້າງບໍ່ ເຊໂປນ ພາຍຫຼັງສິ້ນສຸດອາຍຸການບໍ່ແຮ່.

ໃຫ້ກຽດເຂົ້າຮ່ວມເປັນປະທານໃນພິທີມອບ-ຮັບໂຄງການການຄັ້ງນີ້ມີ ພະນະທ່ານ ບຸນປອນ ສີສຸລາດ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະພາແຫ່ງຊາດ; ທ່ານ ຄຳຜຸຍ ສີບຸນເຮືອງ ເຈົ້າເມືອງ ວິລະບູລີ; ທ່ານ ຟູ ເສຍເຊິນ ປະທານບໍລິສັດ ລຊມລ; ທ່ານ ສະໝານ ອະເນກາ ຮອງຜູ້ຈັດການໃຫຍ່ ລຊມລ; ທ່ານ ຄາຣ ເບເກີ້ ດູລີ້ ຮອງຜູ້ຈັດການໃຫຍ່ຝ່າຍການດຳເນີນງານ; ທ່ານ ຄຳໃສ ວິໄລວົງ ທີ່ປຶກສາກິດຕິມະສັກ (ອະດີດເຈົ້າເມືອງວິລະບູລີ) ລວມທັງອຳນາດການປົກຄອງທ້ອງຖິ່ນ, ນາຍບ້ານ, ປະຊາຊົນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ປະຊາຊົນອ້ອມຂ້າງ.





# ລຊມລ ແລະ ກະຊວງປ້ອງກັນປະເທດ ເຊັນສັນຍາຮ່ວມກັນ 2 ສະບັບ



## ຮ່ວມມື ຈັດການ ທາດລະເບີດ ອຸດສາຫະກຳ ທີ່ປອດໄພ

**12 ກຸມພາ 2021 -** ລຊມລ ໄດ້ສານຕໍ່ ການຮ່ວມມືທີ່ມີມາຍາວນານ ກັບ ກົມອຸດສາຫະກຳປ້ອງກັນປະເທດ, ກະຊວງປ້ອງກັນຊາດ ເພື່ອຮັບປະກັນການນຳເຂົ້າ, ຜະລິດ ແລະ ຂົນສົ່ງ ວັດຖຸທາດເຄມີ, ອຸປະກອນ ແລະ ທາດລະເບີດ ອຸດສາຫະກຳ ຢ່າງປອດໄພ.



ໂຄງການ ເຊໂປນ ນຳໃຊ້ທາດລະເບີດ ໃນ ຂະບວນການລະເບີດຫີນ ເພື່ອໃຫ້ເຮົາສາມາດຂຸດຄົ້ນແຮ່ຄຳ ແລະ ແຮ່ທອງ.

ປີກາຍ, ພວກເຮົາບັນລຸສະຖິຕິໃໝ່ ໃນການຂຸດຄົ້ນແຮ່ໄດ້ 32 ລ້ານໂຕນ ແລະ ຜະລິດຄຳໄດ້ 2 ໂຕນກວ່າ. ໃນປີນີ້, ເປົ້າໝາຍການຜະລິດຄຳຂອງພວກເຮົາແມ່ນໃຫ້ໄດ້ 8 ໂຕນ. ອັນນີ້ ໝາຍຄວາມວ່າ ພວກເຮົາຕ້ອງ ຂຸດຄົ້ນຫຼາຍຂຶ້ນ ແລະ ການລະເບີດຫີນ ກໍເປັນສ່ວນໜຶ່ງທີ່ສຳຄັນຂອງຂະບວນການນີ້.

ທ່ານພັນເອກ ນິກອນ ແກ້ວພັນໄຕ, ຫົວໜ້າກົມອຸດສາຫະກຳປ້ອງປະເທດ, ກະຊວງປ້ອງກັນປະເທດ (ຊ້າຍ) ແລະ ທ່ານ ຈັນທອນ ເນົາວະລາດ, ຫົວໜ້າສາຍງານພົວພັນກັບລັດຖະບານ, ລຊມລ (ຂວາ) ໄດ້ໃຫ້ກຽດເຊັນສັນຍາ 3 ປີ ເຊິ່ງສານຕໍ່ການຮ່ວມມື 2 ທົດສະວັດຜ່ານມາລະຫວ່າງ ລຊມລ ແລະ ກະຊວງປ້ອງກັນປະເທດ.



## ຮ່ວມມື ເກັບກູ້ລະເບີດບໍ່ທັນແຕກ ທີ່ປອດໄພ

**26 ກຸມພາ 2021**- ລຊມລ ໄດ້ລົງນາມ ບົດບັນທຶກຄວາມເຂົ້າໃຈ (MoU) ກັບ ກະຊວງປ້ອງກັນປະເທດ. ການຮ່ວມມືທີ່ຍາວນານນີ້ ແມ່ນສະໜັບສະໜູນການເກັບກູ້ລະເບີດທີ່ບໍ່ທັນແຕກຕົກຄ້າງຢູ່ເຂດ ບໍ່ຄຳ-ທອງ ເຊໂປນ ແລະ ຍົກລະດັບຄວາມອາດສາມາດດ້ານວິຊາການກວດກູ້ຂອງກະຊວງປ້ອງກັນປະເທດ ສຳລັບ ຜົນປະໂຫຍດຂອງລູກຫຼານຄົນຮຸ່ນໃໝ່ໃນອານາຄົດຂອງ ສປປ ລາວ.

ໃຫ້ກຽດລົງນາມໃນບົດບັນທຶກຄວາມເຂົ້າໃຈຄັ້ງນີ້ມີ: ທ່ານ ພົ.ອ ວຽງໄຊ ໄຊສະໝອນ, ຫົວໜ້າກົມຊ່າງແສງ ກົມໃຫຍ່ເສນາທິການ ກະຊວງປ້ອງກັນປະເທດ ແລະ ທ່ານ ຊຶງລິນ ຊາງ, ຜູ້ຈັດການພະແນກບໍລິການເຕັກນິກບໍ່ແຮ່ ຂອງ ລຊມລ ໂດຍການເປັນສັກຂີພິຍານຂອງ ທ່ານ ພົ.ອ ປາດຖະໜາ ບຸກຕິຈັກ, ຮອງຫົວໜ້າຫ້ອງການກົມໃຫຍ່ເສນາທິການ ກະຊວງປ້ອງກັນປະເທດ ແລະ ທ່ານ ສະໝານ ອະເນກາ, ຮອງຜູ້ຈັດການໃຫຍ່ ລຊມລ.

ຕັ້ງແຕ່ການຮ່ວມມືໄດ້ເລີ່ມຕົ້ນຂຶ້ນໄດ້ທົດສະຫວັດຜ່ານມາ, ລຊມລ, ກະຊວງປ້ອງກັນປະເທດ, ຄະນະກຳມະການຄຸ້ມຄອງແຫ່ງຊາດ ແລະ UXO Lao ໄດ້ເຮັດວຽກງານຮ່ວມກັນເພື່ອປັບປຸງມາດຕະຖານການເກັບກູ້ລະເບີດທີ່ບໍ່ທັນແຕກ.

ໃນປີ 2015, ລຊມລ ແລະ ຄະນະກຳມະການຄຸ້ມຄອງແຫ່ງຊາດ ໄດ້ຮ່ວມກັນສ້າງຫຼັກສູດຝຶກອົບຮົມກ່ຽວກັບ ການທຳລາຍລະເບີດທີ່ບໍ່ທັນແຕກເພື່ອສ້າງຄວາມອາດສາມາດໃຫ້ແກ່ນັກວິຊາການລາວ ໃຫ້ໄດ້ຮັບຄຸນວຸທິ ສູງທີ່ສຸດເປັນທີ່ຍອມຮັບໃນລະດັບສາກົນ. ນັບຕັ້ງແຕ່ປີ 1996, ລຊມລ ໄດ້ລົງທຶນຫຼາຍກວ່າ US$51 ລ້ານ, ໄດ້ເກັບກູ້ລະເບີດທີ່ຍັງບໍ່ທັນແຕກກວມໃນເນື້ອທີ 5,700 ເຮັກຕາ ແລະ ໄດ້ທຳລາຍລະເບີດທີ່ບໍ່ທັນແຕກໄດ້ 58,500 ລູກ.

ລຊມລ ແລະ ຄະນະກຳມະການຄຸ້ມຄອງແຫ່ງຊາດ ສືບຕໍ່ລົງທຶນໃສ່ ເຕັກໂນໂລຊີທັນສະໃໝເພື່ອປັບປຸງປະສິດທິຜົນການລະບຸ ແລະ ກວດຄົ້ນ UXO. ຕົວຢ່າງ, ລະບົບການກວດຫາລູກລະເບີດທີ່ບໍ່ທັນແຕກໃນລະດັບເລິກ “Ultra-TEM II” ສາມາດຈັບສັນຍານລູກລະເບີດບໍ່ທັນແຕກໃນລະດັບເລິກເຖິງ 3.5 ແມັດ. ລຊມລ ໄດ້ສືບຕໍ່ປັບປຸງວິທີການກວດຄົ້ນລະເບີດແບບ Fixed Loop Electromagnetic (FLEM) ແລະ ໃນບໍ່ດົນມານີ້ ໄດ້ລົງທຶນໃສ່ ອຸປະກອນກວດຄົ້ນແບບໃຊ້ມືຈັບ ດ້ວຍການຊື້ອຸປະກອນກວດຄົ້ນ Vallon VMX-10.

**ທ່ານ ສະໝານ ອະເນກາ, ຮອງຜູ້ຈັດການໃຫຍ່ຂອງ ລຊມລ** ກ່າວວ່າ: “ພວກເຮົາສືບຕໍ່ຫລຸດຜ່ອນອຸປະສັກທີ່ມີຜົນກະທົບທ່ວງດຶງ ການພັດທະນາຂອງ ສປປ ລາວ. ພວກເຮົາສູ້ຊົນເຮັດໃຫ້ຊຸມຊົນປອດໄພດ້ວຍການຍົກລະດັບຄວາມອາດສາມາດ, ດ້ວຍການລົງທຶນໃນອຸປະກອນ ແລະ ເຜີຍແຜ່ຄວາມຮູ້ກ່ຽວກັບລະເບີດທີ່ບໍ່ທັນແຕກໃຫ້ແກ່ ຄູ່ຮ່ວມງານ ແລະ ຊຸມຊົນຂອງພວກເຮົາ. ລຊມລ ມີຄວາມຮູ້ບຸນຄຸນຢ່າງຍິ່ງສຳລັບການຮ່ວມຢ່າງຕໍ່ເນື່ອງກັບ ກະຊວງປ້ອງກັນປະເທດ, ຄະນະກຳມະການຄຸ້ມຄອງແຫ່ງຊາດ ແລະ UXO Lao ໃນກິດຈະກຳທີ່ອັນຕະລາຍນີ້.”

ທີ່ບໍ່ຄຳ-ທອງ ເຊໂປນ, ວຽກງານເກັບກູ້ລະເບີດທີ່ບໍ່ທັນແຕກ ເປັນວຽກງານໜຶ່ງທີ່ສຳຄັນໃນວົງຈອນການຂຸດຄົ້ນ-ປຸງແຕ່ງ-ຜະລິດບໍ່ແຮ່. ສປປ ລາວ ເປັນປະເທດທີ່ຖືກຖິ້ມລະເບີດຕໍ່ຫົວຄົນທີ່ໜັກໜ່ວງທີ່ສຸດໃນໂລກ ແລະ ບໍ່ຄຳ-ທອງ ເຊໂປນກໍຕັ້ງຢູ່ບ່ອນທີ່ຖືກຖິ້ມລະເບີດລົງໃສ່ຫຼາຍທີ່ສຸດໃນປະເທດ.

# ສະພາແຫ່ງຊາດ ອະນຸມັດ ການອວ່າຍແລວນ້ຳ ໃຫ້ແກ່ ໂຄງການຄຳ ເຊໂປນ





**5 ທັນວາ 2020 -** ທີ່ພາກສະໜາມເຊໂປນ, ພະນະທ່ານ ບຸນປອນ ສີສຸລາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະພາແຫ່ງຊາດ, ພ້ອມດ້ວຍ ທ່ານ ສັນຍາ ປຣະເສີດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ພ້ອມດ້ວຍຄະນະ ຮ່ວມກັບ ຄະນະຜູ້ບໍລິຫານອາວຸໂສຂອງ ບໍລິສັດ ລຊມລ ໄດ້ລົງກວດກາການອວ່າຍແລວນ້ຳ ຂອງນ້ຳກອກ ແລະ ຫ້ວຍຄຸງ ສຳລັບໂຄງການຄຳ ພາກຂະຫຍາຍ ຂອງໂຄງການຄຳ-ທອງ ເຊໂປນ.

ການອວ່າຍແລວນ້ຳກອກ ແລະ ຫ້ວຍຄຸງ ແມ່ນໄດ້ຮັບການອະນຸມັດຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແລະ ຄະນະປະຈຳສະພາແຫ່ງຊາດ ໃນເດືອນຕຸລາ 2020. ການອະນຸມັດດັ່ງກ່າວ ເປັນສ່ວນໜຶ່ງ ໃນຂະບວນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ (ESMMP) ຂອງໂຄງການຄຳ ເຊໂປນ.

**ພະນະທ່ານ ບຸນປອນ ສີສຸລາດ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະພາແຫ່ງຊາດ** ກ່າວວ່າ "ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ໂຄງການເຊໂປນ ທີ່ໄດ້ສືບຕໍ່ຮັກສາມາດຕະຖານສາກົນດ້ານສິ່ງແວດລ້ອມ ໃນລະດັບສູງສຸດ ທີ່ເປັນຕົວແບບໃຫ້ແກ່ໂຄງການອື່ນໆໃນ ສປປ ລາວ". ທ່ານ ກ່າວຕື່ມອີກວ່າ "ຂ້າພະເຈົ້າຂໍອວຍພອນໃຫ້ ບໍລິສັດ ລຊມລ ຈົ່ງປະສົບຜົນສຳເລັດ ໃນການເປັນຄູ່ຮ່ວມພັດທະນາ ສປປ ລາວ."

ການອວ່າຍແລວນ້ຳນີ້ ແມ່ນມີຄວາມໝາຍສຳຄັນ ຕໍ່ກັບໂຄງການຄຳ ເພື່ອຮັບປະກັນການເຂົ້າເຖິງແຫຼ່ງສິນແຮ່ຄຳເຄົ້າ ໃນບໍ່ດິສໂຄເວີຣີຕາເວັນຕົກ, ບໍ່ນາລຸ ແລະ ບໍ່ນ້ຳກອກຕາເວັນຕົກ.

ການເຂົ້າເຖິງແຫຼ່ງສິນແຮ່ຄຳເຄົ້າ ທີ່ຢູ່ກ້ອງແມ່ນ້ຳນັ້ນ ຈະຮັບປະກັນການຍືດອາຍຸການຂອງໂຄງການຄຳ-ທອງ ເຊໂປນ ອອກໄປຕື່ມອີກ ແລະ ສືບຕໍ່ສ້າງຜົນປະໂຫຍດໃຫ້ແກ່ຜູ້ທີ່ມີສ່ວນຮ່ວມທຸກຄົນ ເປັນເວລາອີກຢ່າງໜ້ອຍ 10 ປີ. ແຜນຄຸ້ມຄອງ ແລະ ຕິດຕາມສິ່ງແວດລ້ອມ ແລະ ສັງຄົມ ກຳນົດລະອຽດການຫລຸດຜ່ອນ ແລະ ຄຸ້ມຄອງຢ່າງເຂັ້ມງວດຜົນກະທົບດ້ານສິ່ງແວດລ້ອມ ທີ່ກ່ຽວຂ້ອງກັບການອວ່າຍແລວນ້ຳ.





# ແຜນການຄຸ້ມຄອງ ແລະ ຕິດຕາມ ວຽກງານສາທາລະນະສຸກ ໄດ້ຮັບການ ອະນຸມັດ

**7-8 ທັນວາ 2020 -** ຄະນະຈາກກະຊວງສາທາລະນະສຸກ ໄດ້ລົງຢ້ຽມຢາມເມືອງວິລະບູລີ ເພື່ອລົງປະເມີນແບບລະອຽດ ເງື່ອນໄຂດ້ານສາທາລະນະສຸກຂອງຊຸມຊົນ ແລະ ຜົນກະທົບຈາກໂຄງການ ເຊໂປນ ອີງຕາມ ການປະເມີນຜົນກະທົບຕໍ່ສຸຂະພາບ (HIA) ແລະ ແຜນຄຸ້ມຄອງ ແລະ ຕິດຕາມຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMMP) ຂອງ ລຊມລ. ການປະຕິບັດດັ່ງກ່າວກໍເພື່ອໃຫ້ໂຄງການເຊໂປນສາມາດຮັບ ແລະ ຮັກສາໃບຢັ້ງຢືນດ້ານສາທາລະນະສຸກ ເຊິ່ງເປັນເງື່ອນໄຂທາງກົດໝາຍ ເພື່ອປະຕິບັດຕາມນະໂຍບາຍແຫ່ງຊາດວ່າດ້ວຍດໍາລັດການປະເມີນຜົນກະທົບດ້ານສຸຂະພາບ, ສິ່ງແວດລ້ອມ ແລະ ສັງຄົມ ເພື່ອຮັບປະກັນການສືບຕໍ່ການດໍາເນີນງານທີ່ບໍ່ຂ້ອງຄ່າຂອງໂຄງການ ເຊໂປນ.

ຄະນະໄດ້ລົງຢ້ຽມຢາມຫຼາຍບ້ານທີ່ສໍາຄັນອ້ອມຂ້າງເຂດບໍ່ໂຄງການ ເຊໂປນ ເພື່ອປຶກສາຫາລືກ່ຽວກັບບັນຫາກັບຊຸມຊົນຢູ່ຂັ້ນຮາກຖານ ແລະ ທົບທວນຕົວຊີ້ວັດພື້ນຖານດ້ານສຸຂະພາບ ແລະ ຄວາມຈໍາເປັນດ້ານສຸຂະພາບໃນຊຸມຊົນ. ການລົງຢ້ຽມຢາມຄັ້ງນີ້ຖືວ່າເປັນໂອກາດອັນດີ ໃນການພົວພັນລະຫວ່າງເຈົ້າໜ້າທີ່ສາທາລະນະສຸກ ຂັ້ນສູນກາງ, ແຂວງ ແລະ ເມືອງ ແລະ ຄະນະຜູ້ບໍລິຫານ ລຊມລ ເພື່ອທົບທວນດ້ານສຸຂະອະນາໄມ, ສຸກສາລາແມ່ ແລະ ເດັກ, ໂຮງໝໍເມືອງວິລະບູລີ ແລະ ການຄຸ້ມຄອງນໍ້າສະອາດໃນຊຸມຊົນທ້ອງຖິ່ນ.

ບໍລິສັດ ລຊມລ ໄດ້ໃຫ້ການສະໜັບສະໜູນຢ່າງຫຼວງຫຼາຍໃນການປັບປຸງມາດຕະຖານຊີວິດການເປັນຢູ່ຂອງຊຸມຊົນ ໂດຍຜ່ານໂຄງການນໍ້າສະອາດ ແລະ ສຸຂະອະນາໄມ (ລວມທັງການກໍ່ສ້າງລະບົບນໍ້າປະປາໃຫ້ແກ່ເມືອງວິລະບູລີ). ການຄຸ້ມຄອງຜົນກະທົບຕໍ່ສຸຂະພາບ ຈາກການດໍາເນີນກິດຈະກໍາບໍ່ແຮ່ ແມ່ນສ່ວນໜຶ່ງຂອງກອງທຶນພັດທະນາທ້ອງຖິ່ນ ພາຍໃຕ້ ESMMP ເຊິ່ງໃນປີນີ້ ກໍໄດ້ສະໜອງເຄື່ອງເອັກສະເຣ ໃຫ້ແກ່ໂຮງໝໍເມືອງວິລະບູລີ.

ບໍລິສັດ ລຊມລ ໄດ້ກໍ່ສ້າງວິດຖ່າຍ ແລະ ລະບົບການສະໜອງນໍ້າ ໃຫ້ແກ່ໂຮງໝໍເມືອງວິລະບູລີ ພ້ອມທັງສະໜອງອຸປະກອນການແພດ ແລະ ລົດໂຮງໝໍ ຈໍານວນຫຼາຍຄັນໃຫ້ໂຮງໝໍ ແລະ ສຸກສາລາອ້ອມຂ້າງບໍ່ແຮ່. ບໍລິສັດ ລຊມລ ຍັງສະໜັບສະໜູນແຜນງານໂພຊະນາການແມ່ ແລະ ເດັກ ແລະ ໂຄງການສຸຂະສຶກສາຕ່າງໆ ພາຍໃຕ້ການຮ່ວມມືກັບ ກະຊວງສາທາລະນະສຸກ ແລະ ສູນກາງສະຫະພັນແມ່ຍິງລາວ.

ເມືອງວິລະບູລີໄດ້ ປະກາດຫລຸດພົ້ນຈາກເມືອງທຸກຍາກ ໃນປີ 2015 ດ້ວຍການຍົກລະດັບມາດຕະຖານການດໍາລົງຊີວິດ ອີງຕາມຕົວຊີ້ວັດຄວາມທຸກຍາກຂອງລັດຖະບານລາວ. ລຊມລ ສືບຕໍ່ຮ່ວມມືກັບອໍານາດການປົກຄອງທ້ອງຖິ່ນ ເມືອງວິລະບູລີ ແລະ ຂັ້ນສູນກາງ ເພື່ອຮັບປະກັນການບໍລິການດ້ານສາທາລະນະສຸກຂັ້ນພື້ນຖານ ແລະ ຮັກສາມາດຕະຖານການບໍລິການສຸຂະພາບທີ່ເໝາະສົມ ສໍາລັບ ຊຸມຊົນ.






ຜົນການປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA) ແລະ HIA ເປັນໝາກຫົວໃຈໃນການອະນຸມັດໂຄງການຄໍາ. ບົດສຶກສາດັ່ງກ່າວ ສັງລວມໂຄງການຄໍາໂດຍຫຍໍ້; ປະເມີນສະຖານະປັດຈຸບັນດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການກ່ອນໄລຍະພັດທະນາໂຄງການ; ປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມທີ່ອາດເກີດຂຶ້ນ ແລະ ບັນດາມາດຕະການຫລຸດຜ່ອນ ແລະ ຄຸ້ມຄອງຜົນກະທົບ ຕະຫຼອດວົງຈອນຂອງໂຄງການຄໍາ ນັບຕັ້ງແຕ່ໄລຍະກ່ອນການກໍ່ສ້າງ, ການຜະລິດ ໄປຮອດ ໄລຍະຫຼັງການປິດບໍ່.

# ພາບຂ່າວ



ຕາມການສະເໜີຂອງ ເຈົ້າແຂວງສະຫວັນນະເຂດ ພະນະທ່ານ ສັນຕິພາບ ພົມວິຫານ, ທີມງານຊ່ຽວຊານດ້ານການເກັບກູ້ລະເບີດທີ່ບໍ່ທັນແຕກ ແລະ ຮັບມືເຫດການ ສຸກເສີນ ຂອງ ລຊມລ ໄດ້ເຂົ້າຮ່ວມກວດກາ ແລະ ໃຫ້ການຊ່ວຍເຫຼືອ ຢູ່ສະຖານທີ່ເກີດອຸບັດຕິເຫດຮ້າຍແຮງ ເຮັດໃຫ້ມີຜູ້ເສຍຊີວິດຈໍານວນໜຶ່ງ ທີ່ດ່ານສາກົນລາວບາວ ເຊິ່ງ ໃກ້ ບໍ່ຄໍາ-ທອງ ເຊໂປນ.



ບາງ ມັນທະນາ ສີສົມບັດ ແລະ ນາງ ອອນ ອານິງ ລິນຊົມພູ (ເສື້ອຟ້າ) ເອົາຊະນະ ນາງ ກິ່ງສະໄໝ ຊາເລີ້ ແລະ ນາງ ຈິນດາວອນ ພະໄຊສົມບັດ (ເສື້ອແດງ) 2-1 ໃນການແຂ່ງຂັນກິລາດອກປີກໄກ່ ຮອບຊີງຊະນະເລີດ ປະເພດຄູ່ຍິງ.



ເບື້ອງຫຼັງ ການຖ່າຍທຳ ວີດີໂອໃໝ່ ກ່ຽວກັບ "ເຄັດລັບໃຫ້ປອດໄພຈາກ COVID-19".



ຫົວໜ້າສາຍງານພົວພັນກັບລັດຖະບານ ທ່ານ ຈັນທອນ ເນົາວະລາດ ຕາງໜ້າໃຫ້ ລຊມລ ຮັບໃບຍ້ອງຍໍ ແລະ ຫຼຽນກາພັດທະນາ ຈາກ ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ສຳລັບ ການປະກອບສ່ວນສະໜັບສະໜູນວຽກງານຂອງກະຊວງ ລວມທັງໃນການຟື້ນຟູເສດຖະກິດຈາກຜົນກະທົບຂອງ ການລະບາດພະຍາດ COVID-19.

## ສະຖິຕິ ບໍ່ຄຳ-ທອງ ເຊໂປນ




## ລາຍຈ່າຍສູງສຸດ ຂອງ ບໍ່ຄຳ-ທອງ ເຊໂປນ ປີ 2020

ວຽກງານນາຍນີ້ງ ນຳໃຊ້ ນ້ຳມັນກາຊວນ ຫຼາຍທີ່ສຸດ ສະເລ່ຍ

**72.000** ລິດ/ມື້

ສະສົມເປັນ

**2.2** ລ້ານລິດ/ເດືອນ.

# ສະເຫຼີມສະຫຼອງ 30 ປີ ໃນການປະກອບສ່ວນກັບ ລຊມລ



**2 ທັນວາ 2020 -** ພາກສະໜາມເຊໂປນ ໄດ້ຈັດງານສະເຫຼີມສະຫຼອງ ວັນຊາດທີ 2 ທັນວາ ຄົບຮອບ 45 ປີ ແລະ ຄົບຮອບ 2 ປີ ການເຂົ້າມາດຳເນີນກິດຈະການໃນ ສປປ ລາວ ຂອງ ບໍລິສັດ ຊີເຟີງ ຈີຫຼີງ ບໍ່ຄຳ ຈຳກັດ.

ເຫດການທີ່ພົ້ນເດັ່ນກໍຄືການສະເຫຼີມສະຫຼອງການປະກອບສ່ວນເຮັດວຽກຍາວນານກັບ ລຊມລ ສຳລັບພະນັກງານຫຼາຍກວ່າ 350 ຄົນ. ໃນນັ້ນມີພະນັກງານສະເຫຼີມສະຫຼອງການເຮັດວຽກຄົບ 5 ປີ ຈຳນວນ 181 ທ່ານ, 10 ປີ ຈຳນວນ 112 ທ່ານ, 15 ປີ ຈຳນວນ 71 ທ່ານ, 20 ປີ ຈຳນວນ 7 ທ່ານ, 25 ປີ ຈຳນວນ 3 ທ່ານ ແລະ ຄົບຮອບ 30 ປີ ຈຳນວນ 2 ທ່ານ.



ພວກເຮົາຮັບຮູ້ຜົນງານ ແລະ ການປະກອບສ່ວນຢ່າງຕັ້ງໜ້າ ຂອງ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ແລະ ທ່ານ ໂອສົດ ອິນສີຊຽງໃໝ່ ເຊິ່ງໄດ້ຮັບຖ້ວຍລາງວັນພິເສດ ມອບໂດຍ ທ່ານ ຟູ ເສຍເຊີນ, ປະທານ ລຊມລ.

ທ່ານ ສະໝານ ອະເນກາ ແລະ ທ່ານ ໂອສົດ ອິນສີຊຽງໃໝ່ ຮ່ວມກັນເປັນຜູ້ຄົ້ນພົບ ບໍ່ຄຳ-ທອງເຊໂປນ ໃນຫຼາຍທົດສະວັດທີ່ຜ່ານມາ ແລະ ທັງສອງທ່ານ ມີບົດບາດສຳຄັນ ໃນການພັດທະນາ ແລະ ຕໍ່ກັບຜົນສຳເລັດຂອງ ບໍລິສັດ ລຊມລ ທີ່ພວກເຮົາພາກັນສະເຫຼີມສະຫຼອງໃນທຸກວັນນີ້.

ຂໍສະແດງຄວາມຂອບໃຈ ແລະ ຍ້ອງຍໍຊົມເຊີຍ ທ່ານ ສະໝານ ອະເນກາ, ທ່ານ ໂອສົດ ອິນສີຊຽງໃໝ່ ແລະ ພະນັກງານທຸກທ່ານ ຕໍ່ກັບການປະກອບສ່ວນຢ່າງຕັ້ງໜ້າ ແລະ ອຸທິດເຫື່ອແຮງ ກໍຄື ຄວາມຊື່ສັດ ໃຫ້ແກ່ ບໍລິສັດ ລຊມລ.





# ໂຄງການເຊໂປນ 2.5

**ໂຄງການ ເຊໂປນ 2.5 ແມ່ນຫຍັງ?** ເປັນໂຄງການທີ່ແນໃສ່ ເພີ່ມ ກຳລັງການປ້ອນແຮ່ເຂົ້າໂຮງງານຜະລິດ ຈາກ 1.5Mtpa ເປັນ 2.5Mtpa. ຊື່ໂຄງການ "ເຊໂປນ 2.5" ກໍໄດ້ມາຈາກຕົວເລກເປົ້າໝາຍ 2.5' Mtpa ຂອງພວກເຮົາ.

**ເປັນຫຍັງ ໂຄງການ ເຊໂປນ 2.5 ຈຶ່ງສຳຄັນ?** ໂຄງການເຊໂປນ 2.5 ຈະເປັນອົງປະກອບສຳຄັນເຮັດໃຫ້ ການເຕີບຕົວຂອງ ລຊມລ ໃນອະນາຄົດ ສືບເນື່ອງຕໍ່ໄປ— ໂດຍຮັບປະກັນໃຫ້ພວກເຮົາສາມາດບັນລຸຍຸດທະສາດການເຕີບຕົວໂດຍລວມ, ເປົ້າໝາຍການຜະລິດປີ 2021 ຂອງພວກເຮົາ ແລະ ແຜນທຸລະກິດ 3 ປີ ຂອງ ລຊມລ. ໂຄງການນີ້ ສານຕໍ່ຈາກ ພື້ນຖານຄວາມສຳເລັດທີ່ພວກເຮົາຍາດແຍ່ງ-ບັນລຸມາໄດ້ ໃນປີ 2020 ດ້ວຍການຜະລິດຄຳໄດ້ 2 ໂຕນ.

**ໂຄງການ ເຊໂປນ 2.5 ຈະກະທົບ ການດຳເນີນງານ ຂອງພວກເຮົາແນວໃດ?** 8 ຈຸດ/ໜ້າວຽກ ໃນໂຮງງານຂອງພວກເຮົາ ຈະຖືກກະທົບ-ດັດປັບ ເປັນຂັ້ນໆ ໄປ ເພື່ອ ເພີ່ມ ກຳລັງການປ້ອນແຮ່ເຂົ້າໂຮງງານ ແລະ ປັບປຸງ ປະສິດທິຜົນຂອງການສະກັດຄຳຈາກ ແຮ່.

**ໃຜແດ່ ມີສ່ວນຮ່ວມໃນ ໂຄງການ ເຊໂປນ 2.5?** ເຊໂປນ 2.5 ຈະຖືກຂັບເຄື່ອນດ້ວຍ ທີມງານທີ່ເຂັ້ມແຂງ ແລະ ໝາຍໝັ້ນ ນຳພາໂດຍ ທ່ານ ເວັນ ເທເລີ້,ຮອງຜູ້ຈັດການໃຫຍ່ຝ່າຍການພັດທະນາທຸລະກິດ.

ນອກຈາກນັ້ນ, ໂດຍຮັບຮູ້ຄວາມສຳຄັນຂອງ ໂຄງການ ເຊໂປນ 2.5 ແລະ ການເຕີບຕົວ ກໍຄື ການຫັນປ່ຽນຢ່າງຕໍ່ເນື່ອງ ຂອງ ລຊມລ, ພວກເຮົາໄດ້ສ້າງ ຕຳແໜ່ງໃໝ່ຂຶ້ນ ຄື ຜູ້ຈັດການ ການຜະລິດກວມລວມ. ຕຳແໜ່ງນີ້ ຈະບໍລິຫານຊີ້ນຳລວມ ຫຼາຍຂັ້ນຕອນ ໃນການລິເລີ່ມ-ເປີດນຳໃຊ້ຈຸດຕ່າງໆ ພາຍໃຕ້ໂຄງການນີ້ ພ້ອມທັງເຊື່ອມໂຍງ-ນຳເອົາຂອດທີ່ມີການປັບປຸງຕ່າງໆ ໃຫ້ເຂົ້າກັບສະພາບແວດລ້ອມການຜະລິດ ເພື່ອ ຫລຸດຜ່ອນຄວາມຫຼ້າຊ້າ ແລະ ເລັ່ງການຜະລິດໃຫ້ວ່ອງໄວທັນການ.

ໂດຍສານຕໍ່ຈາກຜົນສຳເລັດໃນຕຳແໜ່ງ ຜູ້ຈັດການພະແນກຜະລິດ, ທ່ານ ຄອນສະຫວັນ ວັນຊະນະ ຈະກ້າວຂຶ້ນມາຮັບ ຕຳແໜ່ງໃໝ່ນີ້.




**ໂຄງການ 2.5 ຈະປິດລົງເມື່ອໃດ?** POX 3 ຈະເປັນຕົວກຳນົດ ຂອບເວລາຂອງ ໂຄງການ ເຊໂປນ 2.5. ໃນຊຸມເດືອນຕໍ່ໜ້າ, ພວກເຮົາຈະສຸມໃສ່ການອອກແບບດ້ານວິສະວະກຳ. ກຳລັງການໃຊ້ POX ສອງສາຍພ້ອມໆກັນ ແມ່ນຈະເປັນໄປໄດ້ພາຍຫຼັງການຕິດຕັ້ງ ໂຮງງານອົກຊີແຊນໃໝ່ ເຊິ່ງຄາດວ່າ ຈະສຳເລັດ ໃນ ເຄິ່ງປີທຳອິດຂອງປີ 2021. ເພື່ອໃຫ້ສຳເລັດການອອກແບບກຳລັງການປ້ອນແຮ່ໃຫ້ໄດ້ 2.5Mtpa ແມ່ນຈະຕ້ອງຜ່ານຫຼາຍຂະບວນການ ເຊິ່ງ ຈະເລີ່ມເປີດນຳໃຊ້ເປັນກ້າວໆ ໃນ 18 ຫາ 24 ເດືອນຕໍ່ໜ້າ.

**ການໂມ້ແຮ່**
ດັດແກ້ ແລະ ສ້ອມແປງ ໂຮງງານປັດຈຸບັນ ແລະ ຕິດຕັ້ງ ລູກເຫຼັກໂຮງໂມ້ໃໝ່.

**ລະບົບການຟູລອຍ**
ຂະຫຍາຍສາຍການຜະລິດແບບຟູລອຍ ເພື່ອຮອງຮັບ ປະລິມານແຮ່ທີ່ສູງຂຶ້ນ ຜ່ານ ສາຍການຜະລິດຫຼັກ.

**POX**
ແລ່ນ POX-ຄູ່ ໄປພ້ອມໆກັນ. ພວມພິຈາລະນາຄົ້ນຄວ້າ ການຕິດຕັ້ງ POX ທີສາມ.

**ອົກຊີແຊນ**
ຕິດຕັ້ງ POX ໃໝ່ ເພື່ອ ທະວີຄູນ ກຳລັງການສ້າງອົກຊີແຊນ ເພື່ອ ຮອງຮັບ ການໃຊ້ POX - ຄູ່ (ສຳເລັດ ກາງປີ 2021).

**ສາຍພານ CCD**
ປັບປຸງ ປ້ຳ ແລະ ທໍ່ ຈຳນວນໜຶ່ງ ເພື່ອຮອງຮັບ ບໍລິມາດ ທີ່ຜ່ານສາຍພານເພີ່ມຂຶ້ນ.

**ການສະກັດແຮ່ດ້ວຍຄວາມຮ້ອນ**
ຕິດຕັ້ງຂັ້ນຕອນການສະກັດແຮ່ເພີ່ມຕື່ມ ເພື່ອຍົກລະດັບ ການສະກັດແຮ່ຈາກ ແຫຼ່ງແຮ່ທີ່ມີ PRI ສູງ (ເຊິ່ງເຮັດໃຫ້ອັດຕາການສະກັດແຮ່ປັດຈຸບັນຕ່ຳ). ແນວໃດກໍດີ, ຕ້ອງລໍຖ້າ ຜົນການທົດລອງເສຍກ່ອນ.

**ຂັ້ນຕອນການລະລາຍແຮ່ຈາກ ກາກບອນ ແລະ ການເຜົາກາກບອນ**
ຂະຫຍາຍຂັ້ນຕອນສຸດທ້າຍຂອງການສະກັດຄຳ ເພື່ອຊ່ວຍເພີ່ມປະລິມານ ການຜະລິດຄຳທີ່ຄາດຄະເນໄວ້.

**ສານເຄມີ**
ເພີ່ມກຳລັງການຮັກສາ ແລະ ຂະບວນການສະໜອງ ສານເຄມີ ທີ່ສຳຄັນ ທີ່ໃຊ້ເຂົ້າໃນການບຳບັດ ແຮ່ເຄົ້າ.

# ຫຼີກເວັ້ນ "3 ບ"

World Health Organization
Western Pacific Region

ໃຫ້ລະມັດລະວັງລະດັບຄວາມສ່ຽງທີ່ແຕກຕ່າງ ຢູ່ ສະຖານທີ່ຕ່າງໆ

## ບາງບ່ອນ ເຊື້ອພະຍາດ COVID-19 ຈະແຜ່ງ່າຍກວ່າ:

1



2



3



**ບ່ອນແອອັດ**

*ທີ່ມີຫຼາຍຄົນໃກ້ກັນ*

**ບ່ອນຄັບແຄບ**

*ໂດຍສະເພາະ ບ່ອນທີ່ມີ ຄົນນັ່ງ-ຢືນໂອ້ລົມໃກ້ໆກັນ*

**ບ່ອນປິດ ທີ່ລົມບໍ່ລ່ວງ**

*ອາກາດບໍ່ລະບາຍ*




ຄວາມສ່ຽງຈະສູງຂຶ້ນ ໃນຈຸດທີ່ ປັດໃຈເຫຼົ່ານີ້ທັບກັນ

**ເຖິງແມ່ນວ່າ ມາດຕະການຈຳກັດຖືກຜ່ອນຄາຍ, ຈົ່ງຄິດກ່ອນວ່າທ່ານຈະໄປໃສ ແລະ #StaySafe (ຮັກສາຄວາມປອດໄພ) ດ້ວຍ ການຫຼີກເວັ້ນ "3 ບ"**

## ທ່ານຄວນເຮັດແນວໃດ?



ຫຼີກເວັ້ນບ່ອນແອອັດ ແລະ ຈຳກັດເວລາຢູ່ໃນບ່ອນປິດ, ບ່ອນລົມບໍ່ລ່ວງ



ຮັກສາໄລຍະຫ່າງຈາກຄົນອື່ນ ຢ່າງຕ່ຳ 1 ແມັດ



ເມື່ອເຮັດໄດ້, ຄວນເປີດປ່ອງຢ້ຽມ ແລະ ປະຕູໃຫ້ອາກາດລະບາຍ



ຮັກສາມືໃຫ້ສະອາດ ແລະ ປິດປາກເວລາໄອ-ຈາມ



ໃສ່ຜ້າປິດປາກເມື່ອຈຳເປັນ ຫຼື ເວລາບໍ່ສາມາດຮັກສາໄລຍະຫ່າງ

**ຖ້າທ່ານບໍ່ສະບາຍ, ຈົ່ງຢູ່ເຮືອນ ນອກຈາກເສຍວ່າຕ້ອງອອກໄປຮັບການປິ່ນປົວຢ່າງຮີບດ່ວນ.**